# ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ເອກະສານລາຍງານການເງິນ

ວັນທີ 31 ທັນວາ 2018

ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

**ສາລະບານ**


| | *ໜ້າ* |
|---|---|
| ຂໍ້ມູນທົ່ວໄປ | 1 |
| ບົດລາຍງານຂອງຄະນະບໍລິຫານ | 2 |
| ບົດລາຍງານຂອງນັກກວດສອບອິດສະຫຼະ | 3 - 4 |
| ໃບລາຍງານຜົນການດຳເນີນງານ | 5 - 6 |
| ໃບລາຍງານຖານະການເງິນ | 7 - 9 |
| ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ | 10 |
| ໃບລາຍງານກະແສເງິນສົດ | 11 - 12 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 13 - 35 |

# ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ຂໍ້ມູນທົ່ວໄປ

**ສາຂາ**

ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ ("ສາຂາ") ແມ່ນສາຂາຂອງ ທະນາຄານແຫ່ງປະເທດຈີນ ຈຳກັດ ທີ່ໄດ້ສ້າງຕັ້ງຂຶ້ນຢູ່ໃນ ສປປ ລາວ. ສາຂາດຳເນີນທຸລະກິດພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານ ສະບັບເລກທີ 06/ທຫລ ອອກໃຫ້ໂດຍ ທະນາຄານ ແຫ່ງ ສປປ ລາວ ("ທຫລ") ລົງວັນທີ 19 ກຸມພາ 2015.

ທຶນຈົດທະບຽນໃນເບື້ອງຕົ້ນຂອງສາຂາແມ່ນ 405,100,000,000 ກີບ. ນະວັນທີ 31 ທັນວາ 2017, ທຶນຈົດທະບຽນທີ່ຖອກແລ້ວແມ່ນ 405,100,000,000 ກີບ. (31 ທັນວາ 2017 ແມ່ນ 405,100,000,000 ກີບ).

ການເຄື່ອນໄຫວຕົ້ນຕໍຂອງສາຂາ ແມ່ນໃຫ້ບໍລິການລະດົມທຶນ ແລະ ສະໜອງເງິນກູ້ເພື່ອປັບປຸງ ແລະ ສ້າງຄວາມເຂັ້ມແຂງໃຫ້ເສດຖະກິດຂອງລາວ.

ສາຂາຕັ້ງຢູ່ອາຄານ ວຽງຈັນ ເຊັນເຕີ, ຖະໜົນຄູວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

**ຜູ້ຈັດການທົ່ວໄປ ແລະ ຕົວແທນທາງດ້ານກົດໝາຍ**

ຕົວແທນທາງດ້ານກົດໝາຍຂອງສາຂາ ພາຍໃນປີ ແລະ ນະມື້ອອກບົດລາຍງານສະບັບນີ້ ແມ່ນທ່ານ Li Zhiyong ຜູ້ອຳນວຍການໃຫຍ່.

**ນັກກວດສອບບັນຊີ**

ນັກກວດສອບບັນຊີຂອງສາຂາແມ່ນ ບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ.

# ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານຂອງ ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ ("ສາຂາ") ມີຄວາມຍິນດີນຳສະເໜີບົດລາຍງານຂອງຕົນເອງ ແລະ ເອກະສານລາຍງານການເງິນຂອງສາຂາ ນະວັນທີ ແລະ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2018.

**ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ເອກະສານລາຍງານການເງິນ**

ຄະນະບໍລິຫານຂອງສາຂາ ແມ່ນມີຄວາມຮັບຜິດຊອບໃນການສ້າງເອກະສານລາຍງານການເງິນຂອງແຕ່ລະປີການບັນຊີ ໃຫ້ຖືກຕ້ອງຕາມຄວາມເປັນຈິງຂອງສາຂາ, ຜົນປະກອບການ ແລະ ກະແສເງິນສົດພາຍໃນປີ. ໃນການສ້າງເອກະສານລາຍງານການເງິນດັ່ງກ່າວ, ຄະນະບໍລິຫານຂອງສາຂາຕ້ອງປະຕິບັດດັ່ງນີ້:

- ຄັດເລືອກເອົາບັນດານະໂຍບາຍການບັນຊີທີ່ເໝາະສົມ ແລະ ຈັດຕັ້ງປະຕິບັດຢ່າງສະໝໍ່າສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງ ໄດ້ຖືກປະຕິບັດຕາມມາດຕະຖານ, ສິ່ງທີ່ໄດ້ປະຕິບັດແຕກຕ່າງຈາກ ມາດຕະຖານໄດ້ເປີດເຜີຍ ແລະ ອະທິບາຍ ຢູ່ໃນເອກະສານລາຍງານການເງິນ;
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມຕໍ່ເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ສາຂາຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າສາຂາ ຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານ ຮັບປະກັນວ່າ ບັນດາຂໍ້ມູນທາງການເງິນທີ່ຖືກບັນທຶກໄວ້ນັ້ນ ໄດ້ຖືກສະແດງຢ່າງຖືກຕ້ອງຢູ່ຕະຫຼອດເວລາ ແລະ ຮັບປະກັນວ່າທຸກໆການບັນທຶກບັນຊີ ແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້. ຄະນະບໍລິຫານຂອງສາຂາຍັງຮັບຜິດຊອບຕໍ່ການຮັກສາຊັບສົມບັດຂອງສາຂາ ແລະ ດ້ວຍເຫດນັ້ນຕ້ອງມີຂັ້ນຕອນທີ່ເໝາະສົມເພື່ອປ້ອງກັນ ແລະ ຄົ້ນຫາການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານຂໍຢັ້ງຢືນວ່າ ສາຂາໄດ້ປະຕິບັດຕາມຂໍ້ກຳນົດທີ່ກ່າວມາຂ້າງເທິງນັ້ນ ໃນການສ້າງເອກະສານລາຍງານການເງິນ.

**ຖະແຫຼງການຂອງຄະນະບໍລິຫານ**

ຄະນະບໍລິຫານ ມີຄວາມຍິນດີຖະແຫຼງການວ່າ ເອກະສານລາຍງານການເງິນແມ່ນໄດ້ສະແດງພາບພົດອັນຖືກຕ້ອງ ແລະ ມີຄວາມຍຸຕິທຳກ່ຽວກັບຖານະທາງການເງິນຂອງສາຂາ ນະວັນທີ 31 ທັນວາ 2018 ລວມທັງຜົນການດຳເນີນງານຂອງສາຂາ ແລະ ກະແສເງິນສົດສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ ໂດຍອີງຕາມກົດໝາຍວ່າດ້ວຍການບັນຊີຂອງ ສປປ ລາວ ແລະ ລະບຽບການທີ່ວາງອອກໂດຍທະນາຄານແຫ່ງ ສປປ ລາວ ໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນ.

ໃນນາມ ແລະ ຕາງໜ້າຂອງຄະນະບໍລິຫານ:

ທ່ານ Li Zhiyong
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

19 ເມສາ 2019

Building a better working world

Ernst & Young Lao Co., Ltd
6th Floor, Kolao Tower I
23 Singha Road, Nongbone Village
Saysettha District
Vientiane Capital, Lao PDR

Tel: +856 21 455 077
Fax: +856 21 455 078
ey.com

ເລກທີອ້າງອີງ: 61245636/20598988

## ບົດລາຍງານຂອງນັກກວດສອບອິດສະຫຼະ

**ຮຽນ: ຄະນະບໍລິຫານຂອງທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂານະຄອນຫຼວງວຽງຈັນ**

ພວກຂ້າພະເຈົ້າ ໄດ້ດຳເນີນການກວດສອບ ເອກະສານລາຍງານການເງິນຂອງທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂານະຄອນຫຼວງ ("ສາຂາ"), ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນນະວັນທີ 31 ທັນວາ 2018, ໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ລວມທັງສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ.

ໃນຄຳເຫັນຂອງພວກຂ້າພະເຈົ້າເຫັນວ່າ ເອກະສານລາຍງານການເງິນຂອງສາຂາໄດ້ຖືກກະກຽມໂດຍສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີແຫ່ງ ສປປ ລາວ ແລະ ບັນດາລະບຽບການຕ່າງໆທີ່ອອກໂດຍ ທະນາຄານ ແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

### *ພື້ນຖານການອອກຄຳເຫັນ*

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ. ບັນດາຄວາມຮັບຜິດຊອບຂອງພວກຂ້າພະເຈົ້າທີ່ກຳນົດໄວ້ພາຍໃຕ້ບັນດາມາດຕະຖານເຫຼົ່ານັ້ນ ໄດ້ຖືກອະທິບາຍເພີ່ມເຕີມໃນວັກ *"ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນ"* ຕໍ່ໄປນີ້. ພວກຂ້າພະເຈົ້າແມ່ນມີຄວາມເປັນເອກະລາດຈາກສາຂາ ໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີ ສຳລັບນັກວິຊາຊີບບັນຊີຂອງສະພາມາດຕະຖານສາກົນດ້ານຈັນຍາບັນ ແລະ ບັນດາຂໍ້ກຳນົດທາງດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆ ໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີ ຂອງສະພາມາດຕະຖານສາກົນດ້ານຈັນຍາບັນ. ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

### *ບັນຫາທີ່ຄວນເອົາໃຈໃສ່ - ພື້ນຖານການບັນຊີ*

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍຊ້ອນທ້າຍ ເລກທີ 2 ຂອງເອກະສານລາຍງານການເງິນ ທີ່ໄດ້ອະທິບາຍນະໂຍບາຍການບັນຊີທີ່ຖືກນຳໃຊ້ໂດຍສາຂາ. ບັນດານະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງທີ່ຈະນຳສະເໜີຖານະທາງການເງິນ, ຜົນການດຳເນີນງານ ແລະ ກະແສເງິນສົດຂອງສາຂາ ໂດຍສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ. ຄຳເຫັນຂອງພວກຂ້າພະເຈົ້າແມ່ນບໍ່ໄດ້ສະແດງຄຳເຫັນແບບມີເງື່ອນໄຂຕໍ່ກັບບັນຫານີ້.

### *ຄວາມຮັບຜິດຊອບຂອງຄະນະບໍລິຫານສາຂາຕໍ່ເອກະສານລາຍງານການເງິນ*

ຄະນະບໍລິຫານຂອງສາຂາແມ່ນມີຄວາມຮັບຜິດຊອບໃນການສ້າງເອກະສານລາຍງານການເງິນ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີແຫ່ງ ສປປ ລາວ ແລະ ບັນດາລະບຽບການອື່ນໆທີ່ວາງອອກໂດຍທະນາຄານ ແຫ່ງ ສປປ ລາວ ທີ່ກ່ຽວຂ້ອງໃນການສ້າງ ແລະ ການນຳສະເໜີເອກະສານລາຍງານການເງິນ ແລະ ສຳລັບບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະບໍລິຫານເຫັນວ່າ ມີຄວາມຈຳເປັນໃນການສ້າງເອກະສານລາຍງານການເງິນ ໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນ, ຄະນະບໍລິຫານ ມີຄວາມຮັບຜິດຊອບໃນການປະເມີນຄວາມອາດສາມາດຂອງສາຂາທາງດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ, ເປີດເຜີຍບັນຫາກ່ຽວກັບຄວາມສືບເນື່ອງໃນການດຳເນີນທຸລະກິດ, ຖ້າມີ ແລະ ນຳໃຊ້ພື້ນຖານການບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຈົນກວ່າທີ່ທາງຄະນະບໍລິຫານສາຂາຫາກເຫັນວ່າທຸລະກິດບໍ່ມີຄວາມອາດສາມາດໃນການດຳເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ທາງຄະນະບໍລິຫານ ມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ.

EY

Building a better working world

## *ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນ*

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າແມ່ນເພື່ອຮັບປະກັນຢ່າງສົມເຫດສົມຜົນວ່າ ເອກະສານລາຍງານການເງິນໂດຍພາບລວມ ແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ ແລະ ເພື່ອອອກບົດລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄໍາເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງ ແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດໍາເນີນໂດຍສອດຄ່ອງກັບມາດຕະຖານສາກົນດ້ານການກວດສອບນັ້ນ ຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແລະ ສາມາດພິຈາລະນາວ່າ ສໍາຄັນ ຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນໍາໃຊ້ເອກະສານລາຍງານການເງິນ.

ໃນການກວດສອບໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິໄສແບບມືອາຊີບ ໃນຕະຫຼອດການດໍາເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກໍານົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດໍາເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄໍາເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງຈາກການທີ່ບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງ ແມ່ນສູງກວ່າຄວາມສ່ຽງທີ່ມີຜົນມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນ ຫຼື ລະເມີດຫຼັກການການຄວບຄຸມພາຍໃນ.

- ທໍາຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄໍາເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງສາຂາ.

- ປະເມີນຄວາມເໝາະສົມຂອງບັນດານະໂຍບາຍທາງບັນຊີທີ່ນໍາໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງທີ່ໄດ້ຖືກນໍາໃຊ້ໂດຍຄະນະບໍລິຫານ.

- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນໍາໃຊ້ພື້ນຖານຂອງບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດໍາເນີນທຸລະກິດຂອງຄະນະບໍລິຫານ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສໍາຄັນທີ່ອາດເກີດຂຶ້ນຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໃສທີ່ສໍາຄັນກ່ຽວກັບຄວາມອາດສາມາດຂອງສາຂາໃນຄວາມສືບເນື່ອງໃນການດໍາເນີນທຸລະກິດ. ຖ້າຫາກພວກຂ້າພະເຈົ້າສະຫຼຸບໄດ້ວ່າ ມີຄວາມບໍ່ແນ່ນອນທີ່ສໍາຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານຂອງນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ເພື່ອສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄໍາເຫັນແບບມີເງື່ອນໄຂ. ການສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງຕາມຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍ່ຕາມ, ບັນດາເຫດການໃນອານະຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ສາຂາຢຸດຕິການສືບຕໍ່ຄວາມສືບເນື່ອງໃນການດໍາເນີນທຸລະກິດ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຄະນະບໍລິຫານກ່ຽວກັບບັນດາບັນຫາອື່ນໆ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ຄົ້ນພົບທາງການກວດສອບທີ່ສໍາຄັນ ລວມທັງບັນດາຂໍ້ບົກຜ່ອງທີ່ສໍາຄັນໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ກໍານົດໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

Ernst & Young Lao Ltd

ບໍລິສັດ ເອີນ ແອນ ຢັງ ລາວ ຈໍາກັດ
ERNST & YOUNG LAO CO.,LTD

ນະຄອນຫຼວງວຽງຈັນ, ສປປ ລາວ

19 ເມສາ 2019

ໃບລາຍງານຜົນການດຳເນີນງານ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2018

| *ລຳດັບ* | *ລາຍການ* | *ບົດອະທິບາຍ ເລກທີ* | *2018* ລ້ານກີບ | *2017* ລ້ານກີບ |
|---|---|---|---|---|
| **A** | **ລາຍຮັບ ແລະ ລາຍຈ່າຍຈາກການດຳເນີນງານ** | | | |
| **1** | **ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | **3** | **140,490** | **77,867** |
| **2** | **ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | **3** | **(24,973)** | **(10,750)** |
| **I.** | **ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ** | | **115,517** | **67,117** |
| **3** | **ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ** | **4** | **5,610** | **3,437** |
| **4** | **ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ** | **4** | **(273)** | **(281)** |
| **5** | **ກຳໄລສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ** | **5** | **13,317** | **7,867** |
| **II.** | **ລາຍຮັບສຸດທິຈາກການດຳເນີນງານ** | | **134,171** | **78,140** |
| **B** | **ລາຍຮັບ ແລະ ລາຍຈ່າຍອື່ນໆ** | | | |
| **6** | **ລາຍຮັບອື່ນໆຈາກການດຳເນີນງານ** | **6** | **1,255** | **771** |
| **7** | **ລາຍຈ່າຍບໍລິຫານ** | | **(24,318)** | **(24,141)** |
| 7.1 | ລາຍຈ່າຍເງິນເດືອນ ແລະ ລາຍຈ່າຍອື່ນໆຂອງພະນັກງານ | 7 | (15,981) | (16,273) |
| 7.2 | ລາຍຈ່າຍບໍລິຫານອື່ນໆ | 8 | (8,337) | (7,868) |
| **8** | **ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ** | | **(3,033)** | **(3,575)** |
| **9** | **ລາຍຈ່າຍອື່ນໆໃນການດຳເນີນງານ** | **9** | **(1,075)** | **(4,686)** |
| **10** | **ຫັກເງິນແຮສຳລັບເງິນກູ້ບໍ່ເກີດດອກອອກຜົນ** | | **-** | **-** |

ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານຜົນການດຳເນີນງານ (ຕໍ່)
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2018

| *ລຳດັບ* | *ລາຍການ* | *ບົດອະທິບາຍ ເລກທີ* | *2018 ລ້ານກີບ* | *2017 ລ້ານກີບ* |
|---|---|---|---|---|
| **III.** | **ກຳໄລກ່ອນຫັກອາກອນ** | | **107,000** | **46,509** |
| **11** | **ອາກອນກຳໄລ** | **22.2** | **(25,777)** | **(9,547)** |
| **IV.** | **ກຳໄລສຸດທິຫຼັງຫັກອາກອນ** | | **81,223** | **36,962** |

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການໜ່ວຍງານການບໍລິຫານການເງິນ ແລະ ການດຳເນີນງານ

ກວດຄືນໂດຍ:

ທ່ານ Li Zhiyong
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

19 ເມສາ 2019

ໃບລາຍງານຖານະການເງິນ
ນະວັນທີ 31 ທັນວາ 2018

| *ລຳດັບ* | *ຊັບສິນ* | *ບົດອະທິບາຍ ເລກທີ* | *31 ທັນວາ 2018 ລ້ານກີບ* | *31 ທັນວາ 2017 ລ້ານກີບ* |
|---|---|---|---|---|
| I | **ເງິນສົດ ແລະ ເງິນຝາກຢູ່ ທະນາຄານ ແຫ່ງ ສປປ ລາວ ("ທຫລ")** | | **961,619** | **428,487** |
| 1 | ເງິນສົດໃນຄັງ | 10 | 25,986 | 21,142 |
| 2 | ເງິນຝາກຢູ່ ທຫລ | 11 | 935,633 | 407,345 |
| II | **ເງິນຝາກຢູ່ທະນາຄານອື່ນ** | | **982,436** | **868,730** |
| 1 | ເງິນຝາກກະແສລາຍວັນ | 12.1 | 536,036 | 308,050 |
| 2 | ເງິນຝາກປະຈຳ | 12.2 | 446,400 | 560,680 |
| III | **ການລົງທຶນໃນຫຼັກຊັບ** | | **853,000** | **829,300** |
| 1 | ຫຼັກຊັບຖືໄວ້ຈົນຄົບກຳນົດ | 13 | 853,000 | 829,300 |
| IV | **ເງິນກູ້ໃຫ້ລູກຄ້າ, ມູນຄ່າສຸດທິຫຼັງຫັກເງິນແຮສຳລັບ ເງິນກູ້ບໍ່ເກີດດອກອອກຜົນ** | **14** | **574,656** | **410,305** |
| V | **ຊັບສິນບັດຄົງທີ່** | | **5,577** | **7,465** |
| 1 | ຊັບສິນບັດຄົງທີ່ມີຕົວຕົນ | 15 | 5,577 | 7,465 |
| VI | **ຊັບສິນອື່ນໆ** | | **26,678** | **23,333** |
| 1 | ດອກເບ້ຍຄ້າງຮັບ | 16 | 13,304 | 7,754 |
| 2 | ຊັບສິນອື່ນໆ | 17 | 13,374 | 15,579 |
| | **ຊັບສິນທັງໝົດ** | | **3,403,966** | **2,567,620** |

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2018

| *ລຳດັບ* | *ໜີ້ສິນ ແລະ ທຶນ* | *ບົດອະທິບາຍ ເລກທີ* | *31 ທັນວາ 2018 ລ້ານກີບ* | *31 ທັນວາ 2017 ລ້ານກີບ* |
|---|---|---|---|---|
| I | **ໜີ້ຕ້ອງສົ່ງໃຫ້ທະນາຄານ** | **18** | **224,149** | **139,730** |
| 1 | ເງິນຝາກກະແສລາຍວັນ | | 188,284 | 72,827 |
| 2 | ເງິນຝາກປະຈຳ | | 30,000 | 66,344 |
| 3 | ໜີ້ຕ້ອງສົ່ງອື່ນໆ | | 5,865 | 559 |
| II | **ໜີ້ຕ້ອງສົ່ງໃຫ້ລູກຄ້າ** | **19** | **2,638,829** | **1,978,112** |
| 1 | ເງິນຝາກກະແສລາຍວັນ | | 1,753,074 | 1,718,143 |
| 2 | ເງິນຝາກປະຢັດ | | 193,314 | 113,692 |
| 3 | ເງິນຝາກປະຈຳ | | 692,441 | 146,277 |
| III | **ໜີ້ສິນອື່ນໆ** | | **24,423** | **13,206** |
| 1 | ດອກເບ້ຍຄ້າງຈ່າຍ | 20 | 10,083 | 2,153 |
| 2 | ໜີ້ຕ້ອງສົ່ງອາກອນ | 22 | 8,683 | 3,065 |
| 3 | ໜີ້ສິນອື່ນໆ | 21 | 5,657 | 7,988 |
| | **ໜີ້ສິນທັງໝົດ** | | **2,887,401** | **2,131,048** |
| IV | **ທຶນ ແລະ ຄັງສຳຮອງ** | | | |
| 1 | ທຶນຈົດທະບຽນທີ່ຖອກແລ້ວ | 23 | 405,100 | 405,100 |
| 2 | ທຶນສຳຮອງຕາມກົດໝາຍ | | 10,859 | 2,737 |
| 3 | ເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ | 14.2 | 2,873 | 4,103 |
| 4 | ກຳໄລສະສົມ | | 97,733 | 24,632 |
| | **ທຶນທັງໝົດ** | | **516,565** | **436,572** |
| | **ໜີ້ສິນ ແລະ ທຶນທັງໝົດ** | | **3,403,966** | **2,567,620** |

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2018

| *ລໍາດັບ* | *ໜີ້ສິນ ແລະ ທຶນ* | *31 ທັນວາ 2018 ລ້ານກີບ* | *31 ທັນວາ 2017 ລ້ານກີບ* |
|---|---|---|---|
| I | **ຄໍາໝັ້ນສັນຍາທີ່ໄດ້ໃຫ້** | | |
| A | **ຄໍາໝັ້ນສັນຍາກ່ຽວກັບການສະໜອງທຶນໄດ້ໃຫ້** | **-** | **3,500** |
| 1 | ຄໍາໝັ້ນສັນຍາສະໜອງທຶນໃຫ້ແກ່ລູກຄ້າ | - | 3,500 |
| B | **ຄໍາໝັ້ນສັນຍາກ່ຽວກັບການຄໍ້າປະກັນທີ່ໄດ້ໃຫ້** | **2,525,781** | **2,665,385** |
| 1 | ຄໍາໝັ້ນສັນຍາຄໍ້າປະກັນໃຫ້ແກ່ລູກຄ້າ | 2,525,781 | 2,665,385 |
| | **ຄໍາໝັ້ນສັນຍາຄໍ້າປະກັນໃຫ້ແກ່ລູກຄ້າທັງໝົດ** | **2,525,781** | **2,668,885** |
| II | **ຫຼັກຊັບຄໍ້າປະກັນ ແລະ ການມັດຈໍາ** | **755,702** | **511,716** |
| 1 | ຫຼັກຊັບຄໍ້າປະກັນ ແລະ ການມັດຈໍາສໍາລັບເງິນກູ້ໃຫ້ແກ່ລູກຄ້າ | 755,702 | 511,716 |
| | **ຄໍາໝັ້ນສັນຍາຄໍ້າປະກັນໃຫ້ແກ່ລູກຄ້າທັງໝົດ** | **755,702** | **511,716** |

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການໜ່ວຍງານການບໍລິຫານການເງິນ ແລະ ການດໍາເນີນງານ

ກວດຄືນໂດຍ:

ທ່ານ Li Zhiyong
ຜູ້ອໍານວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

19 ເມສາ 2019

ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2018

| *ລາຍການ* | *ທຶນຈົດທະບຽນທີ່ຖອກແລ້ວ ລ້ານກີບ* | *ທຶນສຳຮອງຕາມກົດໝາຍ ລ້ານກີບ* | *ເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ ລ້ານກີບ* | *ກຳໄລສະສົມ/ (ຂາດທຶນສະສົມ) ລ້ານກີບ* | *ລວມ ລ້ານກີບ* |
|---|---|---|---|---|---|
| **ຍອດເຫຼືອນະວັນທີ 1 ມັງກອນ 2017** | **405,100** | **-** | **1,224** | **(9,593)** | **396,731** |
| ກຳໄລສຸດທິພາຍໃນປີ | - | - | - | 36,962 | 36,962 |
| ຈັດສັນເຂົ້າຄັງແຮສຳລັບປີ 2017 | - | 2,737 | - | (2,737) | - |
| ເງິນແຮສຸດທິສຳລັບເງິນກູ້ທີ່ເກີດດອກອອກຜົນພາຍໃນປີ | - | - | 2,872 | - | 2,872 |
| ສ່ວນຜິດດ່ຽງຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ | - | - | 7 | - | 7 |
| **ຍອດເຫຼືອນະວັນທີ 31 ມັງກອນ 2017** | **405,100** | **2,737** | **4,103** | **24,632** | **436,572** |
| ກຳໄລສຸດທິພາຍໃນປີ | - | - | - | 81,223 | 81,223 |
| ຈັດສັນເຂົ້າຄັງແຮສຳລັບປີ 2018 | - | 8,122 | - | (8,122) | - |
| ເກັບຄືນຈາກເງິນແຮສຸດທິສຳລັບເງິນກູ້ທີ່ເກີດດອກອອກຜົນພາຍໃນປີ | - | - | (1,253) | - | (1,253) |
| ສ່ວນຜິດດ່ຽງຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ | - | - | 23 | - | 23 |
| **ຍອດເຫຼືອນະວັນທີ 31 ທັນວາ 2018** | **405,100** | **10,859** | **2,873** | **97,733** | **516,565** |

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການໜ່ວຍງານການບໍລິຫານການເງິນ ແລະ ການດຳເນີນງານ

ອະນຸມັດໂດຍ:

ທ່ານ Li Zhiyong
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

19 ເມສາ 2019

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2018

| *ລາຍການ* | *ບົດອະທິບາຍ ເລກທີ* | *2018 ລ້ານກີບ* | *2017 ລ້ານກີບ* |
|---|---|---|---|
| **ກິດຈະກຳການດຳເນີນງານ** | | | |
| **ກຳໄລສຸດທິກ່ອນຫັກອາກອນ** | | **107,000** | **46,509** |
| *ດັດແກ້ສຳລັບ:* | | | |
| ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | | 3,033 | 3,575 |
| ລາຍຈ່າຍເງິນແຮສຳລັບຂາດທຶນສິນເຊື່ອ | 14.2 | (1,253) | 2,872 |
| ລາຍຮັບດອກເບ້ຍ | | (140,490) | (77,867) |
| ລາຍຈ່າຍດອກເບ້ຍ | | 24,973 | 10,750 |
| **ກະແສເງິນສົດເຂົ້າຈາກການດຳເນີນງານ ກ່ອນການປ່ຽນແປງຂອງ ຊັບສິນ ແລະ ໜີ້ສິນໃນການດຳເນີນງານ** | | **(6,737)** | **(14,161)** |
| (ເພີ່ມຂຶ້ນ)/ຫຼຸດລົງ ຂອງຊັບສິນໃນການດຳເນີນງານ | | | |
| ເງິນຝາກຢູ່ທະນາຄານອື່ນ | | (626,037) | (177,521) |
| ເງິນກູ້ໃຫ້ລູກຄ້າ | | (164,351) | (287,901) |
| ຊັບສິນອື່ນໆ | | (21,495) | 2,046 |
| ເພີ່ມຂຶ້ນ/(ຫຼຸດລົງ) ຂອງໜີ້ສິນໃນການດຳເນີນງານ | | | |
| ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ | | 84,419 | 16,174 |
| ໜີ້ຕ້ອງສົ່ງໃຫ້ລູກຄ້າ | | 660,717 | 1,552,868 |
| ເງິນກູ້ຢືມ | | - | (409,200) |
| ໜີ້ສິນອື່ນໆ | | (2,179) | 4,262 |
| ດອກເບ້ຍຄ້າງຮັບ | | 134,940 | 75,144 |
| ດອກເບ້ຍຄ້າງຈ່າຍ | | (17,043) | (10,958) |
| ອາກອນກຳໄລທີ່ຊຳລະພາຍໃນປີ | 22.2 | (20,288) | (6,482) |
| **ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ** | | **21,946** | **744,271** |
| **ການເຄື່ອນໄຫວດ້ານການລົງທຶນ** | | | |
| ການຊື້ຊັບສົມບັດຄົງທີ່ ແລະ ອຸປະກອນ | 15 | (1,145) | (984) |
| ການລົງທຶນໃນຫຼັກຊັບ | | - | (420,100) |
| **ກະແສເງິນສົດສຸດທິທີ່ໃຊ້ເຂົ້າໃນການເຄື່ອນໄຫວດ້ານການລົງທຶນ** | | **(1,145)** | **(421,084)** |

ໃບລາຍງານກະແສເງິນສົດ (ຕໍ່)
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2018

| *ລາຍການ* | *ບົດອະທິບາຍ ເລກທີ* | *2018 ລ້ານກີບ* | *2017 ລ້ານກີບ* |
|---|---|---|---|
| **ການເຄື່ອນໄຫວດ້ານການເງິນ** | | | |
| **ກະແສເງິນສົດສຸດທິຈາກການເຄື່ອນໄຫວດ້ານການເງິນ** | | **-** | **-** |
| **ເພີ່ມຂຶ້ນສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ** | | **20,801** | **323,187** |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ** | | **1,089,552** | **766,365** |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ** | **24** | **1,110,353** | **1,089,552** |

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການໜ່ວຍງານການບໍລິຫານການເງິນ ແລະ ການດຳເນີນງານ

ກວດຄືນໂດຍ:

ທ່ານ Li Zhiyong
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

19 ເມສາ 2019

## 1. ຂໍ້ມູນກ່ຽວກັບສາຂາ

***ການສ້າງຕັ້ງ ແລະ ການດຳເນີນງານ***

ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ ("ສາຂາ") ແມ່ນສາຂາຂອງ ທະນາຄານແຫ່ງປະເທດຈີນ ຈຳກັດ ທີ່ໄດ້ສ້າງຕັ້ງຂຶ້ນຢູ່ໃນ ສປປ ລາວ. ສາຂາດຳເນີນທຸລະກິດພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານ ສະບັບເລກທີ 06/ທຫລ ອອກໃຫ້ໂດຍ ທະນາຄານ ແຫ່ງ ສປປ ລາວ ("ທຫລ") ລົງວັນທີ 19 ກຸມພາ 2015.

ການເຄື່ອນໄຫວຕົ້ນຕໍຂອງສາຂາ ແມ່ນໃຫ້ບໍລິການລະດົມທຶນ ແລະ ສະໜອງເງິນກູ້ເພື່ອປັບປຸງ ແລະ ສ້າງຄວາມເຂັ້ມແຂງໃຫ້ເສດຖະກິດຂອງລາວ.

***ທຶນຈົດທະບຽນ***

ທຶນຈົດທະບຽນໃນເບື້ອງຕົ້ນຂອງສາຂາແມ່ນ 405,100,000,000 ກີບ. ນະວັນທີ 31 ທັນວາ 2018, ທຶນຈົດທະບຽນທີ່ຖອກແລ້ວແມ່ນ 405,100,000,000 ກີບ.

***ຜູ້ຈັດການທົ່ວໄປ***

ຜູ້ຈັດການທົ່ວໄປຂອງສາຂາ ພາຍໃນປີ ແລະ ນະມື້ອອກບົດລາຍງານສະບັບນີ້ແມ່ນທ່ານ Li Zhiyong.

***ທີ່ຕັ້ງ***

ສາຂາຕັ້ງຢູ່ອາຄານ ວຽງຈັນ ເຊັນເຕີ, ຖະໜົນຄູວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

***ພະນັກງານ***

ພະນັກງານທັງໝົດຂອງສາຂານະວັນທີ 31 ທັນວາ 2018 ມີ 33 ຄົນ (31 ທັນວາ 2017: 27 ຄົນ).

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

### *2.1. ບົດຖະແຫຼງການໃນການປະຕິບັດ*

ຄະນະບໍລິຫານຂອງສາຂາ ຂໍຢັ້ງຢືນວ່າໄດ້ກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບກົດໝາຍບັນຊີ ຂອງ ສປປ ລາວ ແລະ ລະບຽບການທີ່ວາງອອກໂດຍ ທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການສ້າງ ແລະ ນຳສະເໜີເອກະສານລາຍງານການເງິນ.

### *2.2. ພື້ນຖານໃນການກະກຽມ*

ສາຂາໄດ້ບັນທຶກບັນຊີເປັນເງິນກີບລາວ ("ກີບ") ແລະ ສ້າງເອກະສານລາຍງານການເງິນ ເປັນຫົວໜ່ວຍລ້ານກີບກີບ ("ລ້ານກີບ") ຕາມດຳລັດ ເລກທີ02/ນຍ ໂດຍນາຍົກລັດຖະມົນຕີແຫ່ງ ສປປ ລາວ ໃນວັນທີ 22 ມີນາ 2000 ແລະ ກົດໝາຍບັນຊີ ຂອງ ສປປ ລາວ ແລະ ລະບຽບການອື່ນໆທີ່ວາງອອກໂດຍທະນາຄານ ແຫ່ງ ສປປ ລາວ ທີ່ກ່ຽວຂ້ອງໃນການສ້າງ ແລະ ການນຳສະເໜີເອກະສານລາຍງານການເງິນ.

ເອກະສານລາຍງານການເງິນສະບັບນີ້ໄດ້ຖືກກະກຽມໂດຍນຳໃຊ້ ຫຼັກການບັນຊີ, ຂັ້ນຕອນ ແລະ ການລາຍງານທາງການບັນຊີທີ່ຖືກຍອມຮັບໃນ ສປປ ລາວ. ດັ່ງນັ້ນ ໃບລາຍງານຜົນການດຳເນີນງານ, ໃບລາຍງານຖານະການເງິນ,ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ, ໃບລາຍງານກະແສເງິນສົດ ແລະ ບົດອະທິບາຍຊ້ອນທ້າຍໃນເອກະສານລາຍງານການເງິນ ແມ່ນບໍ່ໄດ້ສ້າງຂຶ້ນສຳລັບທ່ານທີ່ບໍ່ໄດ້ຮູ້ຫຼັກການບັນຊີ, ຂັ້ນຕອນ ແລະ ການປະຕິບັດການບັນຊີຂອງລາວ. ສະນັ້ນ ເອກະສານລາຍງານສະບັບນີ້ບໍ່ມີຈຸດປະສົງເພື່ອນຳສະເໜີຖານະການເງິນ, ຜົນຂອງການດຳເນີນງານ ແລະ ກະແສເງິນສົດອີງຕາມຫຼັກການບັນຊີ ແລະ ການປະຕິບັດການບັນຊີທີ່ຍອມຮັບໄດ້ຂອງປະເທດອື່ນນອກຈາກ ສປປ ລາວ.

*ປີການບັນຊີ*

ປີການບັນຊີຂອງສາຂາທີ່ໄດ້ນຳໃຊ້ເຂົ້າໃນການນຳສະເໜີລາຍງານການເງິນແມ່ນເລີ່ມຈາກວັນທີ 1 ມັງກອນແລະ ສິ້ນສຸດໃນວັນທີ 31 ທັນວາ.

### *2.3. ການປ່ຽນແປງໂດຍນະໂຍບາຍການບັນຊີ*

ນະໂຍບາຍການບັນຊີທີ່ທະນາຄານນຳໃຊ້ເພື່ອກະກຽມເອກະສານລາຍງານການເງິນເຫຼົ່ານີ້ແມ່ນມີຄວາມສອດຄ່ອງກັບເອກະສານລາຍງານການເງິນທີ່ກະກຽມສຳລັບການລາຍງານຂອງສາຂາ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2017, ຍົກເວັ້ນການປ່ຽນແປງຂອງນະໂຍບາຍການບັນຊີ ແລະ ບົດອະທິບາຍຊ້ອນທ້າຍທີ່ກ່ຽວກັບການດຳເນີນງານດັ່ງຕໍ່ໄປນີ້:

ດັ່ງທີ່ໄດ້ເປີດເຜີຍໃນບົດອະທິບາຍຊ້ອນທ້າຍ ເລກທີ 2.8, ໃນວັນທີ 29 ມິຖຸນາ 2018 ຜູ້ວ່າການຂອງທະນາຄານແຫ່ງ ສປປລາວ ໄດ້ປະກາດໃຊ້ ຂໍ້ຕົກລົງ ເລກທີ 512/ທຫລ ກ່ຽວກັບ ການຈັດຊັ້ນໜີ້ ແລະ ການຫັກເງິນແຮຄ່າເສື່ອມ ສຳລັບກິດຈະກຳສິນເຊື່ອ, ເຊິ່ງມີຜົນບັງຄັບໃຊ້ ໃນວັນທີ 27 ກັນຍາ 2018 ແລະໄດ້ຖືກນຳໃຊ້ປ່ຽນແທນ ຂໍ້ຕົກລົງ ເລກທີ 324/ທຫລ ລົງວັນທີ 19 ເມສາ 2011. ໃນວັນທີ 14 ພະຈິກ 2018, ກົມຄຸ້ມຄອງທະນາຄານທຸລະກິດ ຂອງທະນາຄານແຫ່ງ ສປປລາວ ໄດ້ອອກຄຳແນະນຳຈັດຕັ້ງປະຕິບັດເລກທີ 898/ກຄທ ເພື່ອກຳນົດຄຳແນະນຳໃນການປະຕິບັດຕໍ່ກັບ ຂໍ້ຕົກລົງ ເລກທີ 512/ທຫລ. ລະບຽບການເຫຼົ່ານີ້ ນຳໄປສູ່ການປ່ຽນແປງທີ່ສຳຄັນໃນນະໂຍບາຍການບັນຊີດັ່ງຕໍ່ໄປນີ້:

- ການຈັດຊັ້ນໜີ້: ປ່ຽນແປງ ແລະ ເພີ່ມເຕີມ ຂໍ້ກຳນົດໃນການຈັດຊັ້ນໜີ້ ສຳລັບເງິນກູ້ທີ່ມີການປັບໂຄງສ້າງ.
- ເງິນແຮຄ່າເສື່ອມ: ເພີ່ມທາງເລືອກສຳລັບການຄິດໄລ່ເງິນແຮຄ່າເສື່ອມໂດຍການລວມເອົາມູນຄ່າຫຼຸດຂອງຫຼັກຊັບຄ້ຳປະກັນເຂົ້າໃນສູດຄິດໄລ່.
- ພາລະຜູກພັນ: ເພີ່ມເຕີມການຮັບຮູ້, ການຈັດຊັ້ນ ແລະ ການຫັກເງິນແຮ ສຳລັບຂໍ້ຜູກພັນທາງການເງິນ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *2.3. ການປ່ຽນແປງໂດຍນະໂຍບາຍການບັນຊີ* (ຕໍ່)

ເນື່ອງຈາກບໍ່ມີຄຳແນະນຳຈາກ ທຫລ ໃນການຈັດຕັ້ງປະຕິບັດລະບຽບໃໝ່ທີ່ມີຜົນກະທົບຍ້ອນຫຼັງ, ທະນາຄານຈຶ່ງໄດ້ເລືອກຈັດຕັ້ງປະຕິບັດການປ່ຽນແປງນີ້ໃນພາຍໜ້າ. ດັ່ງນັ້ນ, ມູນຄ່າ ແລະ ການນຳສະເໜີການປຽບທຽບໂຕເລກທັງໝົດສຳລັບປີ 2017 ແມ່ນຍັງຮັກສາໄວ້ຄືເກົ່າ.

### *2.4. ການຮັບຮູ້ລາຍຮັບ ແລະ ລາຍຈ່າຍດອກເບ້ຍ*

ລາຍຮັບ ແລະ ລາຍຈ່າຍດອກເບ້ຍແມ່ນຖືກຮັບຮູ້ຢູ່ໃນໃບລາຍງານຜົນການດຳເນີນງານ ອີງຕາມການຕັ້ງໜີ້ຄ້າງຮັບຄ້າງຈ່າຍໂດຍນຳໃຊ້ວິທີການຄິດໄລ່ແບບສະເໝີຕົວ ແລະ ອັດຕາດອກເບ້ຍແມ່ນໄດ້ຖືກກຳນົດໄວ້ໃນສັນຍາເງິນກູ້/ເງິນຝາກກັບລູກຄ້າ.

ການຮັບຮູ້ລາຍຮັບດອກເບ້ຍຄ້າງຮັບຈະຖືກຢຸດຕິກໍ່ຕໍ່ເມື່ອເງິນກູ້ທີ່ຖືກຈັດຊັ້ນເປັນໜີ້ທີ່ບໍ່ເກີດດອກອອກຜົນ (ບົດອະທິບາຍຊ້ອນທ້າຍເລກທີ 2.8 ຄວາມໝາຍຂອງເງິນກູ້ທີ່ບໍ່ເກີດດອກອອກຜົນ) ຫຼື ເມື່ອຜູ້ບໍລິຫານເຊື່ອວ່າ ຜູ້ກູ້ຢືມແມ່ນບໍ່ມີຄວາມສາມາດຊຳລະຄືນດອກເບ້ຍ ແລະ ຕົ້ນທຶນໄດ້. ລາຍຮັບດອກເບ້ຍກ່ຽວກັບເງິນກູ້ແມ່ນໄດ້ຖືກບັນທຶກລົງໃນໃບລາຍງານຜົນການດຳເນີນງານເມື່ອໄດ້ຮັບເງິນຕົວຈິງ.

### *2.5. ການຮັບຮູ້ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ*

ຄ່າທຳນຽມ ແລະ ຄ່າບໍລິການປະກອບດ້ວຍຄ່າທຳນຽມທີ່ໄດ້ຮັບຈາກການບໍລິການໂອນເງິນ (ລວມມີການຊຳລະການຄ້າ), ຄ່າທຳນຽມທີ່ເກີດຈາກການແລກປ່ຽນເງິນຕາຕ່າງປະເທດ ແລະ ຄ່າທຳນຽມທີ່ເກີດຂຶ້ນຈາກທຸລະກິດເງິນກູ້.

ຄ່າທຳນຽມ ແລະ ຄ່າບໍລິການແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານບົນພື້ນຖານຫລັກການເງິນສົດ.

### *2.6. ເງິນສົດ ແລະ ທຽບເທົ່າເງິນສົດ*

ເງິນສົດ ແລະ ທຽບເທົ່າເງິນສົດແມ່ນລວມມີເງິນສົດ ແລະ ການລົງທຶນໄລຍະສັ້ນທີ່ມີສະພາບຄ່ອງສູງ ໂດຍມີອາຍຸຄົບກຳນົດຕ່ຳກວ່າ 30 ວັນ ເຊິ່ງພ້ອມທີ່ຈະປ່ຽນເປັນເງິນສົດໄດ້ ແລະ ບັນຊີໜີ້ຕ້ອງຮັບຈາກທະນາຄານອື່ນທີ່ມີອາຍຸຄົບກຳນົດຕ່ຳກວ່າ ຫຼື ເທົ່າກັບ 30 ວັນ.

### *2.7. ເງິນກູ້ໃຫ້ລູກຄ້າ*

ເງິນກູ້ໃຫ້ລູກຄ້າແມ່ນຖືກຮັບຮູ້ຕາມຕົ້ນທຶນ ແລະ ສະແດງຍອດຄ້າງຊຳລະລົບໃຫ້ເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນໃນທ້າຍປີ.

### *2.8. ການຈັດຊັ້ນ ແລະ ເງິນແຮຂອງກິດຈະກຳສິນເຊື່ອ*

*ການຈັດຊັ້ນໜີ້*

ອີງຕາມຂໍ້ຕົກລົງ ເລກທີ 512/ທຫລ ("BOL512") ລົງວັນທີ 29 ມິຖຸນາ 2018 ຄຳແນະນຳຈັດຕັ້ງປະຕິບັດເລກທີ 898/ກຄທ ("BOL898")ລົງວັນທີ 14 ພະຈິກ 2018 ສາຂາໄດ້ຈັດຊັ້ນເງິນກູ້ ເປັນ 5 ກຸ່ມ ໂດຍອີງຕາມປະຫວັດການຄ້າງຈ່າຍ ແລະ ປັດໄຈເຊີງຄຸນະພາບອື່ນໆເງິນກູ້ ຖືກຈັດຊັ້ນເປັນໜີ້ປົກກະຕິ (ກຸ່ມ A) ຫຼື ໜີ້ຄວນເອົາໃຈໃສ່ (ກຸ່ມ B) ແມ່ນຈະຖືກພິຈາລະນາເປັນເງິນກູ້ທີ່ເກີດດອກອອກຜົນ, ເງິນກູ້ທີ່ບໍ່ຖືຈັດຊັ້ນເປັນໜີ້ຕ່ຳກວ່າມາດຕະຖານ (ກຸ່ມ C) ຫຼື ໜີ້ສົງໄສ (ກຸ່ມ D) ຫຼື ໜີ້ສູນ (ກຸ່ມ E) ແມ່ນຈະຖືກພິຈາລະນາເປັນ ເງິນກູ້ທີ່ບໍ່ເກີດດອກອອກຜົນ ຫຼື ໜີ້ຕ້ອງທວງຍາກ (NPL)

**2. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ** (ຕໍ່)

***2.8. ການຈັດຊັ້ນ ແລະ ເງິນແຮຂອງກິດຈະກໍາສິນເຊື່ອ*** (ຕໍ່)

*ເງິນແຮ*

ອີງຕາມຂໍ້ຕົກລົງ ເລກທີ 512/ທຫລ ແລະ ຄໍາແນະນໍາຈັດຕັ້ງປະຕິບັດເລກທີ 898/ກຄທ, ສາຂາສ້າງເງິນແຮ ໂດຍອີງຕາມການຈັດຊັ້ນໜີ້ຂອງແຕ່ລະກຸ່ມດັ່ງຕໍ່ໄປນີ້:

| *ກຸ່ມ* | *ອັດຕາເງິນແຮ* | *ປະເພດເງິນແຮ (i)* | *ການບັນຊີສໍາລັບຍອດເຫຼືອເງິນແຮ (ii)* | *ການບັນຊີສໍາລັບ ສ່ວນປ່ຽນແປງໃນຍອດເຫຼືອເງິນແຮ (iii)* |
|---|---|---|---|---|
| ເງິນກູ້ທີ່ເກີດດອກອອກຜົນ | | | | |
| A | 0.5% | ເງິນແຮທົ່ວໄປ | ໃນສ່ວນທຶນເຈົ້າຂອງ | ລາຍຈ່າຍ/ລາຍຮັບອື່ນ |
| B | 3.0% | ເງິນແຮສະເພາະ | ໃນສ່ວນທຶນເຈົ້າຂອງ | ລາຍຈ່າຍ/ລາຍຮັບອື່ນ |
| ເງິນກູ້ທີ່ບໍ່ເກີດດອກອອກຜົນ | | | | |
| C | 20.0% | ເງິນແຮສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສໍາລັບ ໜີ້ NPL |
| D | 50.0% | ເງິນແຮສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສໍາລັບ ໜີ້ NPL |
| E | 100.0% | ເງິນແຮສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສໍາລັບ ໜີ້ NPL |

(i). ຈໍານວນເງິນແຮແມ່ນຖືກຄິດໄລ່ດ້ວຍສູດຄິດໄລ່ດັ່ງລຸ່ມນີ້:

(ກ) ເງິນແຮທົ່ວໄປ = ອັດຕາເງິນແຮ x ຍອດເງິນກູ້ທີ່ຍັງເຫລືອ

(ຂ) ເງິນແຮສະເພາະ = ອັດຕາເງິນແຮ x ຍອດເງິນກູ້ທີ່ຍັງເຫລືອ

*ສາຂາສາມາດເລືອກທີ່ຈະບໍ່ລວມເອົາມູນຄ່າພູດຂອງຫຼັກຊັບຄໍ້າປະກັນເຂົ້າໃນສູດຄິດໄລ່ເງິນແຮ ດັ່ງທີ່ໄດ້ອະນຸຍາດໄວ້ໃນ ຂໍ້ຕົກລົງ ເລກທີ 512/ທຫລ ແລະ ຄໍາແນະນໍາຈັດຕັ້ງປະຕິບັດເລກທີ 898/ກຄທ.*

(ii). ຍອດເຫຼືອເງິນແຮຂອງ *ເງິນກູ້ທີ່ເກີດດອກອອກຜົນ* ແມ່ນໄດ້ບັນທຶກໃນໃບລາຍງານຖານະການເງິນ ຢູ່ "ເງິນແຮສໍາລັບເງິນກູ້ທີ່ເກີດດອກອອກຜົນ" ພາຍໃຕ້ທຶນ ແລະ ຄັງສໍາຮອງຂອງສາຂາ

ຍອດເຫຼືອສະສົມຂອງເງິນແຮຂອງ *ເງິນກູ້ທີ່ບໍ່ເກີດດອກອອກຜົນ* ແມ່ນໄດ້ບັນທຶກໃນໃບລາຍງານຖານະການເງິນ ຢູ່ "ເງິນກູ້ໃຫ້ລູກຄ້າ, ຫຼັງຫັກເງິນແຮສໍາລັບໜີ້ຕ້ອງຮັບທວງຍາກ".

(iii). ສ່ວນປ່ຽນແປງສໍາລັບເງິນແຮຂອງ *ເງິນກູ້ທີ່ເກີດດອກອອກຜົນ* ແມ່ນຖືກບັນທຶກໃນໃບລາຍງານຜົນການດໍາເນີນງານ ຢູ່ "ລາຍຈ່າຍຈາກການດໍາເນີນງານອື່ນໆ" ສໍາລັບລາຍຈ່າຍເງິນແຮ ແລະ "ລາຍຮັບຈາກການດໍາເນີນງານອື່ນໆ" ສໍາລັບການເກັບຄືນລາຍຈ່າຍເງິນແຮ.

ສ່ວນປ່ຽນແປງສໍາລັບເງິນແຮຂອງ *ເງິນກູ້ທີ່ບໍ່ເກີດດອກອອກຜົນ* ແມ່ນຖືກບັນທຶກໃນໃບລາຍງານຜົນການດໍາເນີນງານ ຢູ່ "ລາຍຈ່າຍ (ເກັບຄືນ)/ເງິນແຮສຸດທິສໍາລັບໜີ້ຕ້ອງຮັບທວງຍາກ".

## 2. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ (ຕໍ່)

### *2.9. ຫຼັກຊັບຖືໄວ້ຈົນຄົບກໍານົດ*

ຫຼັກຊັບການລົງທຶນທີ່ຖືໄວ້ຈົນຄົບກໍານົດ ແມ່ນຫຼັກຊັບທີ່ຄົງທີ່ ຫຼື ການຊໍາລະຄືນສາມາດກໍານົດໄດ້ ແລະ ມີມື້ຄົບກໍານົດທີ່ແນ່ນອນ ເຊິ່ງສາຂາມີຈຸດປະສົງ ຫຼື ສາມາດຖືໄວ້ຈົນຄົບກໍານົດເພື່ອຮັບດອກເບ້ຍ. ເມື່ອມີການຂາຍກ່ອນວັນຄົບກໍານົດ, ຫຼັກຊັບເຫຼົ່ານີ້ຈະຖືກຈັດປະເພດຄືນໃໝ່ ເປັນຫຼັກຊັບເພື່ອການຄ້າ ຫຼື ຫຼັກຊັບທີ່ພ້ອມສໍາລັບການຂາຍ.

ຫຼັກຊັບຖືໄວ້ຈົນຄົບກໍານົດແມ່ນຖືກຮັບຮູ້ເລີ່ມຕົ້ນຈາກຕົ້ນທຶນ ແລະ ຈະຖືກນໍາສະເໜີຕາມຕົ້ນທຶນໃນໄລຍະຕໍ່ມາ. ຄ່າບໍລິການເພີ່ມເຕີມ ແລະ ສ່ວນຫຼຸດ ຈາກການຊື້ຫຼັກຊັບແມ່ນຈະຖືກຄິດໄລ່ໃນໃບລາຍງານຜົນການດໍາເນີນງານ ໂດຍການນໍາໃຊ້ວິທີການຄິດໄລ່ແບບເສັ້ນຊື່ຕະຫຼອດປີ ນັບຈາກວັນທີທີ່ໄດ້ຮັບມາຈົນເຖິງວັນຄົບກໍານົດ.

ຫຼັກຊັບຖືໄວ້ຈົນຄົບກໍານົດແມ່ນຈະຕ້ອງມີການທົບທວນສໍາລັບຂໍ້ບົກຜ່ອງເປັນແຕ່ລະໄລຍະ. ເງິນແຮສໍາລັບຫຼັກຊັບທີ່ມີຂໍ້ບົກຜ່ອງແມ່ນຈະຖືກສ້າງຂຶ້ນເມື່ອມີການຫຼຸດລົງຢ່າງມີໃນສໍາຄັນ ຫຼື ເປັນເວລາດົນຂອງມູນຄ່າຍຸດຕິທໍາທີ່ຕໍ່າກວ່າຕົ້ນທຶນ. ເຊິ່ງເງິນແຮດັ່ງກ່າວຈະຖືກຮັບຮູ້ໃນນາມຂອງ "ກໍາໄລ/(ຂາດທຶນ) ສຸດທິຈາກຫຼັກຊັບການລົງທຶນ" ໃນໃບລາຍງານຜົນການດໍາເນີນງານ.

### *2.10. ຊັບສິນບັດຄົງທີ່*

ຊັບສິນບັດຄົງທີ່ ລວມມີ ຊັບສິນບັດຄົງທີ່ທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ. ຊັບສິນບັດຄົງທີ່ມີຕົວຕົນປະກອບມີ ເຄື່ອງໃຊ້ຫ້ອງການ, ເຄື່ອງເຟີນີເຈີ ແລະ ເຄື່ອງຕົບແຕ່ງການປັບປຸງອາຄານ, ຄອມພິວເຕີ ແລະ ພາຫະນະ. ຊັບສິນບັດຄົງທີ່ບໍ່ມີຕົວຕົນປະກອບມີ ລາຍຈ່າຍກ່ອນການສ້າງຕັ້ງວິສາຫະກິດ.

ຊັບສິນບັດຄົງທີ່ໄດ້ຖືກລາຍງານຕາມຕົ້ນທຶນລົບໃຫ້ ຄ່າຫລຸ້ຍຫ້ຽນສະສົມ ແລະ ຄ່າເສື່ອມມູນຄ່າ, ຖ້າມີ.

ຕົ້ນທຶນຂອງຊັບສິນປະກອບດ້ວຍມູນຄ່າຊື້ບວກກັບຄ່າໃຊ້ຈ່າຍທີ່ຕິດພັນໃນການເຮັດໃຫ້ຊັບສິນບັດຄົງທີ່ສາມາດນໍາໃຊ້ໄດ້.

ບັນດາລາຍຈ່າຍສໍາລັບການຊື້ເພີ່ມ, ລາຍຈ່າຍການປັບປຸງ ແລະ ການຕໍ່ອາຍຸແມ່ນຈະຖືກຕີເປັນຕົ້ນທຶນ ແລະ ລາຍຈ່າຍສໍາລັບຄ່າບໍາລຸງຮັກສາ ແລະ ຄ່າສ້ອມແປງແມ່ນຈະຖືກບັນທຶກຢູ່ໃນໃບລາຍງານຜົນການດໍາເນີນງານ.

ເມື່ອຊັບສິນບັດຖືກຂາຍ ຫຼື ໝົດອາຍຸ, ຕົ້ນທຶນ ແລະ ຄ່າຫລຸ້ຍຫ້ຽນສະສົມຈະຖືກສະສາງຈາກໃບລາຍງານຖານະການເງິນ ແລະ ກໍາໄລ ຫຼື ຂາດທຶນທີ່ມາຈາກການຂາຍອອກຈະຖືກບັນທຶກຢູ່ໃນໃບລາຍງານຜົນການດໍາເນີນງານ.

**2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

***2.11 ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ***

ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມຂອງຊັບສິນບັດຄົງທີ່ ແມ່ນຖືກຄິດໄລ່ຕາມວິທີຄິດໄລ່ແບບເສັ້ນຊື່ ໃນອັດຕາທີ່ກຳນົດໃຊ້ຕໍ່ອາຍຸການນຳໃຊ້ທີ່ຄາດຄະເນຂອງຊັບສິນບັດເຫຼົ່ານັ້ນ ໂດຍອີງຕາມກົດໝາຍສ່ວຍສາອາກອນຂອງ ສປປ ລາວ ເລກທີ.70/ສພຊ, ລົງວັນທີ 15 ທັນວາ 2015, ອອກໂດຍປະທານສະພາແຫ່ງຊາດ ເຊິ່ງມີສິດນຳໃຊ້ໃນວັນທີ 24 ພຶດສະພາ 2016 . ອັດຕາໃຊ້ການຫັກຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າປະຈຳປີ ມີດັ່ງນີ້:

| | |
|---|---|
| *ຊັບສິນບັດຄົງທີ່ມີຕົວຕົນ:* | |
| ອາຄານ ແລະ ການປັບປຸງອາຄານ | 5% |
| ເຟີນີເຈີ ແລະ ເຄື່ອງຕົບແຕ່ງ | 20% |
| ອຸປະກອນ ຄອມພິວເຕີ | 20% |
| ພາຫະນະ | 20% |
| *ຊັບສິນບັດຄົງທີ່ບໍ່ມີຕົວຕົນ:* | |
| ລາຍຈ່າຍກ່ອນການສ້າງຕັ້ງວິສາຫະກິດ | 50% |

***2.12. ຄັງສະສົມຕາມລະບຽບການ***

ພາຍໃຕ້ຂໍ້ກຳນົດຂອງກົດໝາຍວ່າດ້ວຍ ທະນາຄານທຸລະກິດ ລົງວັນທີ 16 ມັງກອນ 2007, ບັນດາທະນາຄານທຸລະກິດຕ້ອງໄດ້ແບ່ງຜົນກຳໄລສຸດທິເພື່ອນຳໄປສ້າງຄັງສຳຮອງຕາມລະບຽບການ ດັ່ງລຸ່ມນີ້:

- ຄັງສະສົມຕາມລະບຽບການ
- ຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆ

ໂດຍອີງຕາມກົດລະບຽບກ່ຽວກັບຄວາມພຽງພໍຂອງທຶນເລກທີ 01/ທຫລ ລົງວັນທີ 28 ສິງຫາ 2001 ໂດຍຜູ້ວ່າການທະນາຄານແຫ່ງ ສປປ ລາວ ແລະ ຄຳແນະນຳໃນການຈັດຕັ້ງປະຕິບັດອື່ນໆ, ບັນດາທະນາຄານທຸລະກິດ ແມ່ນຕ້ອງໄດ້ສ້າງຄັງສະສົມຕາມລະບຽບການ ໃນອັດຕາຕ່ຳສຸດ 5% ຂອງກຳໄລຫລັງອາກອນໃນແຕ່ລະປີ, ຫຼັງຈາກຫັກມູນຄ່າຂາດທຶນສະສົມໄວ້ເປັນເງິນທຶນສຳຮອງຕາມກົດໝາຍ ຈົນກວ່າທຶນດັ່ງກ່າວຈະມີມູນຄ່າເຖິງ 10% ຂອງທຶນຊັ້ນທີ 1. ໂດຍອີງຕາມຄວາມຕ້ອງການດັ່ງກ່າວ, ຄະນະບໍລິຫານຈະພິຈາລະນາເປີເຊັນທີແນ່ນອນໃນແຕ່ລະປີ.

ກອງທຶນເພື່ອຂະຫຍາຍທຸລະກິດ ແລະ ກອງທຶນອື່ນໆຕ້ອງໄດ້ຮັບການສ້າງຂຶ້ນຕາມການພິຈາລະນາຂອງຄະນະຜູ້ບໍລິຫານ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *2.13. ລາຍການເຄື່ອນໄຫວທີ່ເປັນເງິນຕາຕ່າງປະເທດ*

ສາຂາໄດ້ປະຕິບັດລະບົບການບັນຊີ ແລະ ບັນທຶກທຸກການເຄື່ອນໄຫວຕາມສະກຸນເງິນເດີມ. ຊັບສິນ ແລະ ໜີ້ສິນ ທີ່ເປັນເງິນຕາຕ່າງປະເທດໃນທ້າຍປີ ແມ່ນໄດ້ຖືກຕີມູນຄ່າເປັນເງິນກີບຕາມອັດຕາແລກປ່ຽນ ໃນມື້ສ້າງໃບລາຍງານຖານະການເງິນ. ລາຍຮັບ ແລະ ລາຍຈ່າຍຈາກເງິນຕາຕ່າງປະເທດພາຍໃນປີແມ່ນຈະຖືກຕີມູນຄ່າເປັນເງິນກີບຕາມອັດຕາແລກປ່ຽນ ໃນມື້ທີ່ມີການເຄື່ອນໄຫວ.ສ່ວນຜິດດ່ຽງເງິນຕາຕ່າງປະເທດທີ່ເກີດຈາກການຕີມູນຄ່າຊັບສິນ ແລະ ໜີ້ສິນໃນໃບລາຍງານຖານະການເງິນ ແມ່ນຖືກຮັບຮູ້ຢູ່ໃນໃບລາຍງານຜົນການດຳເນີນງານ. ລາຍການອັດຕາແລກປ່ຽນຂອງສະກຸນເງິນຕາຕ່າງປະເທດໃນວັນທີ 31 ທັນວາ 2018 ແລະ 2017 ແມ່ນມີດັ່ງລຸ່ມນີ້:

| | *31 ທັນວາ 2018* | *31 ທັນວາ 2017* |
|---|---|---|
| | *ກີບ* | *ກີບ* |
| ໂດລາສະຫະລັດ ("USD") | 8,530 | 8,293 |
| ບາດ ("THB") | 261.90 | 253.84 |
| ຢວນ ("CNY") | 1,240 | 1,272 |

### *2.14. ອາກອນ*

ການຄິດໄລ່ຄັງແຮສຳລັບເສຍອາກອນກຳໄລແມ່ນອີງຕາມກຳໄລພາຍໃນປີປະຈຸບັນ ເຊິ່ງອີງຕາມກົດໝາຍສ່ວຍສາອາກອນຂອງ ສປປ ລາວ. ສາຂາມີພັນທະຈ່າຍອາກອນໃນອັດຕາ 24% ຂອງກຳໄລກ່ອນຫັກອາກອນໃນທ້າຍປີ 31 ທັນວາ 2018 ໂດຍອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນເລກທີ 70/ສພຊ ລົງວັນທີ 15 ທັນວາ 2015 ເຊິ່ງມີຜົນບັງຄັບໃຊ້ຫຼັງຈາກວັນທີ 24 ພຶດສະພາ 2016. ການແຈ້ງອາກອນຂອງສາຂາຕ້ອງໄດ້ຮັບການກວດກາຈາກກົມສ່ວຍສາອາກອນ ເນື່ອງຈາກກົດໝາຍ ແລະ ລະບຽບການດ້ານສ່ວຍສາອາກອນ ແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນເງິນທີ່ສະແດງຢູ່ໃນເອກະສານລາຍງານການເງິນ ອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງຂອງກົມສ່ວຍສາອາກອນ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *2.15. ຜົນປະໂຫຍດຫຼັງອອກການ*

ຜົນປະໂຫຍດຫລັງອອກການຈະຖືກຈ່າຍໃຫ້ພະນັກງານສາຂາຜູ້ທີ່ບຳນານ ໂດຍພະແນກກອງທຶນສະຫວັດດີການສັງຄົມເຊິ່ງຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ສາຂາໄດ້ຖືກກຳນົດໃຫ້ປະກອບສ່ວນເຂົ້າໃນຜົນປະໂຫຍດຫລັງອອກການຂອງພະນັກງານ ໂດຍການຈ່າຍເງິນເຂົ້າປະກັນສັງຄົມໃນອັດຕາ 6% ຂອງເງິນເດືອນພື້ນຖານຂອງພະນັກງານທຸກໆເດືອນ ແຕ່ບໍ່ເກີນ 270,000 ກີບຕໍ່ພະນັກງານໜຶ່ງຄົນ ສາຂາບໍ່ມີພັນທະອື່ນອີກນອກຈາກຜົນປະໂຫຍດນີ້ໃຫ້ກັບພະນັກງານຫລັງອອກການ.

*ຜົນປະໂຫຍດຈາກການຍຸດຈ້າງງານ*

ອີງຕາມມາດຕາ 82 ຂອງກົດໝາຍແຮງງານສະບັບປັບປຸງ ເລກທີ 43/ສພຊ ອອກໂດຍປະທານປະເທດແຫ່ງ ສປປ ລາວ ລົງວັນທີ 28 ມັງກອນ 2014, ສາຂາມີພັນທະຈ່າຍຊົດເຊີຍໃຫ້ແກ່ພະນັກງານຜູ້ທີ່ລາອອກອີງຕາມເງື່ອນໄຂລຸ່ມນີ້:

- ກໍລະນີພະນັກງານຂາດທັກສະຄວາມຊຳນິຊຳນານ ຫຼື ມີສຸຂະພາບບໍ່ດີ ແລະ ບໍ່ສາມາດສືບຕໍ່ເຮັດວຽກໄດ້;
- ກໍລະນີສາຂາ ພິຈາລະນາວ່າຈຳເປັນຕ້ອງຫຼຸດພະນັກງານ ເພື່ອປັບປຸງອີງການຈັດຕັ້ງຂອງການເຮັດວຽກໃນໜ່ວຍງານແຮງງານ.

ສຳລັບຜົນປະໂຫຍດຂອງພະນັກງານທີ່ເກີດຈາກສອງກໍລະນີທີ່ໄດ້ກ່າວມາຂ້າງເທິງນັ້ນ, ສາຂາຕ້ອງໄດ້ຈ່າຍເງິນຊົດເຊີຍໃຫ້ພະນັກງານ ໂດຍຄິດໄລ່ໃນອັດຕາ 10% ຂອງເງິນເດືອນພື້ນຖານຂອງພະນັກງານທີ່ຖືກໄລ່ອອກໄດ້ຮັບກ່ອນອອກວຽກ. ນະວັນທີ 31 ທັນວາ 2018, ບໍ່ມີພະນັກງານສາຂາຖືກໄລ່ອອກຍ້ອນສາເຫດຂ້າງເທິງ, ດັ່ງນັ້ນ, ສາຂາຈຶ່ງບໍ່ໄດ້ຄິດໄລ່ລາຍຈ່າຍສ່ວນນີ້ໄວ້ໃນເອກະສານລາຍງານການເງິນຂອງສາຂາ.

## 3. ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ

| | *2018* | *2017* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| **ລາຍຮັບຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍຈາກ:** | | |
| ທະນາຄານອື່ນ | 37,098 | 16,266 |
| ເງິນກູ້ໃຫ້ລູກຄ້າ | 47,233 | 24,738 |
| ຫຼັກຊັບຖືໄວ້ຈົນຄົບກຳນົດ | 56,159 | 36,863 |
| | **140,490** | **77,867** |
| **ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍໃຫ້:** | | |
| ທະນາຄານອື່ນ | (2,869) | (4,016) |
| ເງິນຝາກລູກຄ້າ | (22,104) | (6,734) |
| | **(24,973)** | **(10,750)** |
| **ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | **115,517** | **67,117** |

## 4. ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ

| | *2018* *ລ້ານກີບ* | *2017* *ລ້ານກີບ* |
|---|---|---|
| **ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການຈາກ:** | | |
| ຄ່າບໍລິການຊຳລະສະສາງ | 3,369 | 1,266 |
| ຄ່າບໍລິການທາງການເງິນ | 1,204 | 1,318 |
| ຄ່າທຳນຽມ ແລະ ຄ່າບໍລິການອື່ນໆ | 1,037 | 853 |
| | **5,610** | **3,437** |
| **ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການສຳລັບ:** | | |
| ຄ່າທຳນຽມບໍລິການຊຳລະສະສາງ | (236) | (214) |
| ຄ່າທຳນຽມຊຳລະສະສາງໃຫ້ທະນາຄານກາງ | (6) | (13) |
| ຄ່າສະມາຊິກ | (31) | (54) |
| | **(273)** | **(281)** |
| **ກຳໄລສຸດທິຈາກລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ** | **5,337** | **3,156** |

## 5. ກຳໄລສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ

| | *2018* *ລ້ານກີບ* | *2017* *ລ້ານກີບ* |
|---|---|---|
| ກຳໄລຈາກສ່ວນຕ່າງການຊື້ຂາຍເງິນຕາຕ່າງປະເທດ | 10,168 | 6,580 |
| ກຳໄລຈາກສ່ວນຕ່າງການປັບມູນຄ່າຂອງລາຍການທາງການເງິນ | 3,149 | 1,287 |
| | **13,317** | **7,867** |

## 6. ລາຍຮັບອື່ນໆຈາກການດຳເນີນງານ

| | *2018* *ລ້ານກີບ* | *2017* *ລ້ານກີບ* |
|---|---|---|
| ການເກັບຄືນຂອງເງິນແຮທົ່ວໄປ *(ບົດອະທິບາຍຊ້ອນທ້າຍ 14.2)* | 1,253 | 768 |
| ອື່ນໆ | 2 | 3 |
| | **1,255** | **771** |

**7. ລາຍຈ່າຍເງິນເດືອນ ແລະ ລາຍຈ່າຍອື່ນໆຂອງພະນັກງານ**

| | *2018* | *2017* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ຄ່າແຮງງານ ແລະ ເງິນອຸດໜູນ | 14,699 | 15,630 |
| ລາຍຈ່າຍອື່ນໆກ່ຽວກັບພະນັກງານ | 1,282 | 643 |
| | **15,981** | **16,273** |

**8. ລາຍຈ່າຍບໍລິຫານອື່ນໆ**

| | *2018* | *2017* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ຄ່າເຊົ່າຫ້ອງການ | 2,185 | 2,285 |
| ຄ່າບໍລິການພາຍນອກ | 338 | 560 |
| ຄ່າສ້ອມແປງ ແລະ ບຳລຸງຮັກສາ | 410 | 362 |
| ໂຄສະນາ, ການຕະຫຼາດ ແລະ ການສົ່ງເສີມການຂາຍ | 165 | 18 |
| ຄ່າໂທລະຄົມມະນາຄົມ | 1,120 | 801 |
| ຄ່າຝຶກອົບຮົມ, ປະຊຸມ ແລະ ສຳມະນາ | 1,912 | 2,070 |
| ຄ່ານ້ຳ ແລະ ຄ່າໄຟຟ້າ | 909 | 784 |
| ອື່ນໆ | 1,298 | 988 |
| | **8,337** | **7,868** |

**9. ລາຍຈ່າຍອື່ນໆໃນການດຳເນີນງານ**

| | *2018* | *2017* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ *(ບົດອະທິບາຍເລກທີ 14.2)* | - | 3,640 |
| ຄ່າໃຊ້ຈ່າຍໃຫ້ກອງທຶນປົກປ້ອງຜູ້ຝາກເງິນ | 1,022 | 628 |
| ຄ່າໃຊ້ອື່ນໆ | 53 | 418 |
| | **1,075** | **4,686** |

## 10. ເງິນສົດໃນຄັງ

| | *31 ທັນວາ 2018* | *31 ທັນວາ 2017* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ເງິນສົດໃນຄັງທີ່ເປັນເງິນກີບ | 8,384 | 2,448 |
| ເງິນສົດໃນຄັງທີ່ເປັນເງິນຕາຕ່າງປະເທດ | 17,602 | 18,694 |
| | **25,986** | **21,142** |

## 11. ເງິນຝາກຢູ່ ທະນາຄານແຫ່ງ ສປປ ລາວ ("ທຫລ")

| | *31 ທັນວາ 2018* | *31 ທັນວາ 2017* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ເງິນຝາກກະແສລາຍວັນ | 326,331 | 199,680 |
| ເງິນຝາກມີກຳນົດ(i) | 426,500 | - |
| ເງິນຝາກພາກບັງຄັບ(ii) | 182,797 | 207,660 |
| ເງິນຝາກຄ້ຳປະກັນທຶນຈົດທະບຽນ(iii) | 5 | 5 |
| | **935,633** | **407,345** |

(i) ເງິນຝາກຢູ່ ທຫລ ແມ່ນມີໄລຍະເວລາກຳໜົດ 5 ປີ ແລະ ມີອັດຕາດອກເບ້ຍ 4.30% ເຊິ່ງແມ່ນອັດຕາດອກເບ້ຍແບບລອຍຕົວ 6 ເດືອນຕໍ່ປີ

(ii) ຕາມຂໍ້ກຳນົດຂອງ ທຫລ, ສາຂາຕ້ອງໄດ້ຮັກສາຄັງແຮເງິນສົດໄວ້ກັບ ທຫລ ໃນຮູບແບບເງິນຝາກພາກບັງຄັບ ເຊິ່ງຖືກຄິດໄລ່ ໃນອັດຕາ 5% ສຳລັບເງິນກີບ ແລະ 10% ສຳລັບສະກຸນເງິນຕາຕ່າງປະເທດ, ເດືອນໜຶ່ງສອງຄັ້ງ, (2017: 5% ແລະ 10%) ຂອງຍອດເງິນຝາກລູກຄ້າທີ່ມີກຳນົດຕ່ຳກ່ວາ 12 ເດືອນ. ພາຍໃນປີ, ສາຂາໄດ້ຮັກສາເງິນຝາກພາກບັງຄັບເພື່ອໃຫ້ສອດຄ່ອງຕາມຂໍ້ກຳນົດຂອງ ທຫລ.

(iii) ອີງຕາມດຳລັດເລກທີ 02/ນຍ ຂອງ ທຫລ, ສາຂາຂອງທະນາຄານຕ່າງປະເທດແມ່ນຖືກກຳນົດໃຫ້ຮັກສາເງິນຝາກພິເສດໄວ້ກັບ ທຫລ ເທົ່າກັບ 25% ຂອງທຶນຈົດທະບຽນທີ່ຖອກແລ້ວ ເພື່ອຮັບປະກັນຄວາມສືບເນື່ອງໃນການດຳເນີນງານ. ສາຂາຖືກອະນຸຍາດໂດຍ ທຫລ ໂດຍໜັງສືທາງການເລກທີ 194/ກຄທ ລົງວັນທີ 18 ພຶດສະພາ 2015, ເລກທີ 239/ກຄທ ລົງວັນທີ 18 ມິຖຸນາ 2015 ແລະ 334/ກຄທ ລົງວັນທີ 19 ສິງຫາ 2016 ໃຫ້ຖອນເງິນຈາກບັນຊີເງິນຝາກເພື່ອເປັນທຶນໃນການດຳເນີນງານ. ນະວັນທີ 31 ທັນວາ 2018 ຍອດເຫຼືອເງິນຝາກພິເສດຂອງສາຂາມີ 5 ລ້ານກີບ.

ເງິນຝາກຢູ່ ທຫລ ມີເງິນຝາກກະແສລາຍວັນ, ເງິນຝາກພາກບັງຄັບ ແລະ ເງິນຝາກຄ້ຳປະກັນທຶນຈົດທະບຽນ. ເງິນຝາກດັ່ງກ່າວແມ່ນບໍ່ມີດອກເບ້ຍ.

## 12. ເງິນຝາກຢູ່ກັບທະນາຄານອື່ນ

### *12.1 ເງິນຝາກກະແສລາຍວັນ*

| | *31 ທັນວາ 2018*<br>*ລ້ານກີບ* | *31 ທັນວາ 2017*<br>*ລ້ານກີບ* |
|---|---|---|
| **ເງິນຝາກກະແສລາຍວັນກັບທະນາຄານພາຍໃນປະເທດ** | | |
| ທະນາຄານ ອຸດສະຫະກຳ ແລະ ການຄ້າຈີນ ຈຳກັດ ສາຂານະຄອນຫຼວງ | 10,474 | 2,141 |
| **ເງິນກະແສລາຍວັນກັບທະນາຄານຕ່າງປະເທດ** | | |
| ທະນາຄານແຫ່ງປະເທດຈີນ, ໜ່ວຍຊາງໄຮ ອາເອັມບີ ເທຣດິ້ງ | 114,484 | 8,779 |
| ທະນາຄານແຫ່ງປະເທດຈີນ (ຮົງກົງ) ຈຳກັດ | 20,418 | 1,972 |
| ທະນາຄານແຫ່ງປະເທດຈີນ (ໄທ) ຈຳກັດມະຫາຊົນ | 2,220 | 7,360 |
| ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | 225,132 | 58,201 |
| ທະນາຄານແຫ່ງປະເທດຈີນ, ສາຂານິວຢອກ | 163,245 | 229,533 |
| ທະນາຄານແຫ່ງປະເທດຈີນ, ສາຂາຊາງໄຮ | 63 | 64 |
| | **536,036** | **308,050** |

### *12.2 ເງິນຝາກປະຈຳ*

| | *31 ທັນວາ 2018*<br>*ລ້ານກີບ* | *31 ທັນວາ 2017*<br>*ລ້ານກີບ* |
|---|---|---|
| **ເງິນຝາກປະຈຳກັບທະນາຄານຕ່າງປະເທດ** | | |
| ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | - | 331,720 |
| ທະນາຄານແຫ່ງປະເທດຈີນ, ໜ່ວຍຊາງໄຮ ອາເອັມບີ ເທຣດິ້ງ | 446,400 | 228,960 |
| | **446,400** | **560,680** |

ເງິນຝາກປະຈຳຢູ່ທະນາຄານແຫ່ງປະເທດຈີນ, ທະນາຄານແຫ່ງປະເທດຈີນ, ໜ່ວຍຊາງໄຮ ອາເອັມບີ ເທຣດິ້ງ ມີກຳນົດ 3 ເດືອນ ແລະ ມີອັດຕາດອກເບ້ຍ 2.45% - 3.45% ຕໍ່ປີ

## 13. ຫຼັກຊັບຖືໄວ້ຈົນຄົບກໍານົດ

| | *31 ທັນວາ 2018* *ລ້ານກີບ* | *31 ທັນວາ 2017* *ລ້ານກີບ* |
|---|---|---|
| ພັນທະບັດອອກໂດຍ ທຫລ | 853,000 | 829,300 |
| | **853,000** | **829,300** |

ພັນທະບັດອອກໂດຍ ທຫລໃນວັນທີ 31 ທັນວາ 2018 ລວມມີ:

| *ໄລຍະ ເວລາ* | *ວັນທີຊື້* | *ວັນທີຄົບກໍານົດ* | *ມູນຄ່າທີ່ກໍານົດໄວ້ ໂດລາ* | *ທຽບເທົ່າເງິນກີບ ລ້ານກີບ* | *ອັດຕາດອກເບ້ຍ % ຕໍ່ປີ* |
|---|---|---|---|---|---|
| 5 ປີ | 21-ຕຸລາ-15 | 25-ຕຸລາ-20 | 50,000,000 | 426,500 | 4.30% + ອັດຕາ ດອກເບ້ຍແບບລອຍ ຕົວ 6 ເດືອນ |
| 5 ປີ | 16-ມິຖຸນາ-17 | 16-ມິຖຸນາ-22 | 50,000,000 | 426,500 | 4.30% + ອັດຕາ ດອກເບ້ຍແບບລອຍ ຕົວ 6 ເດືອນ |
| | | | **100,000,000** | **853,000** | |

## 14. ເງິນກູ້ໃຫ້ລູກຄ້າ, ຫັກເງິນແຮສໍາລັບເງິນກູ້ທີ່ບໍ່ເກີດດອກອອກຜົນ

| | *31 ທັນວາ 2018* *ລ້ານກີບ* | *31 ທັນວາ 2017* *ລ້ານກີບ* |
|---|---|---|
| ເງິນກູ້ໃຫ້ລູກຄ້າ *(ບົດອະທິບາຍເລກທີ 14.1)* | 574,656 | 410,305 |
| ລົບ ເງິນແຮສໍາລັບເງິນກູ້ບໍ່ເກີດດອກອອກຜົນ | - | - |
| | **574,656** | **410,305** |

ອັດຕາດອກເບ້ຍສໍາລັບການປ່ອຍເງິນກູ້ໃຫ້ແກ່ລູກຄ້າພາຍໃນປີແມ່ນມີດັ່ງລຸ່ມນີ້:

| | *2018* *ອັດຕາດອກເບ້ຍ* *% ຕໍ່ປີ* | *2017* *ອັດຕາດອກເບ້ຍ* *% ຕໍ່ປີ* |
|---|---|---|
| ເງິນກູ້ທີ່ເປັນສະກຸນເງິນກີບ | 8.00 - 11.00% | 8.00 - 11.00% |
| ເງິນກູ້ທີ່ເປັນສະກຸນເງິນໂດລາ | 6.95 - 9.03% | 7.75% |
| ເງິນກູ້ທີ່ເປັນສະກຸນເງິນຢວນ | 5.50 - 6.50% | N/A |

**14. ເງິນກູ້ໃຫ້ລູກຄ້າ, ຫັກເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ (ຕໍ່)**

***14.1 ການວິເຄາະຂອງເງິນກູ້ໃຫ້ລູກຄ້າ***

*ການວິເຄາະຕາມສະກຸນເງິນ*

| | *31 ທັນວາ 2018* | *31 ທັນວາ 2017* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ເງິນກູ້ສະກຸນເງິນກີບ | 355,500 | 356,400 |
| ເງິນກູ້ສະກຸນເງິນໂດລາ | 81,888 | 53,905 |
| ເງິນກູ້ສະກຸນເງິນຢວນ | 137,268 | - |
| | **574,656** | **410,305** |

*ວິເຄາະຕາມສະຖານະເງິນກູ້*

| | *31 ທັນວາ 2018* | *31 ທັນວາ 2017* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ເງິນກູ້ທີ່ເກີດດອກອອກຜົນ | 574,656 | 410,305 |
| ເງິນກູ້ທີ່ບໍ່ເກີດດອກອອກຜົນ | - | - |
| | **574,656** | **410,305** |

*ວິເຄາະຕາມມື້ຄົບກຳນົດ*

| | *31 ທັນວາ 2018* | *31 ທັນວາ 2017* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ເງິນກູ້ໄລຍະສັ້ນ | 142,230 | 12,947 |
| ເງິນກູ້ໄລຍະກາງ | 132,426 | 97,358 |
| ເງິນກູ້ໄລຍະຍາວ | 300,000 | 300,000 |
| | **574,656** | **410,305** |

*ວິເຄາະຕາມພາກສ່ວນເສດຖະກິດ*

| | *31 ທັນວາ 2018* | *31 ທັນວາ 2017* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ບໍລິສັດອຸດສາຫະກຳ | 365,588 | 348,600 |
| ບໍລິສັດກໍ່ສ້າງ | 145,870 | - |
| ບໍລິສັດກະສິກຳ | 51,180 | 49,758 |
| ບໍລິສັດການຄ້າ | 12,018 | 11,947 |
| | **574,656** | **410,305** |

**14. ເງິນກູ້ໃຫ້ແກ່ລູກຄ້າຫຼັງຫັກເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ (ຕໍ່)**

***14.2 ເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ***

ການເຄື່ອນໄຫວຂອງເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນຂອງສາຂາ ພາຍໃນປີ ມີດັ່ງນີ້:

| | *2018* | *2017* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| **ນະວັນທີ 1 ມັງກອນ** | **4,103** | **1,224** |
| ເງິນແຮ ແລະ ເກັບຄືນເງິນແຮພາຍໃນປີ | (1,253) | 2,872 |
| ສ່ວນຜິດດ່ຽງເງິນຕາຕ່າງປະເທດ | 23 | 7 |
| **ນະວັນທີ 31 ທັນວາ** | **2,873** | **4,103** |

ລາຍລະອຽດຂອງການຈັດຊັ້ນໜີ້ ແລະ ການຫັກເງິນແຮຕາມຂໍ້ກຳນົດຂອງທະນາຄານແຫ່ງ ສປປ ລາວ ນະວັນທີ 31 ທັນວາ 2018 ມີດັ່ງລຸ່ມນີ້:

| *ການຈັດຊັ້ນໜີ້* | *ຍອດເຫຼືອເງິນກູ້*<br>*ລ້ານກີບ* | *ເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ*<br>*ລ້ານກີບ* | *ເງິນແຮທັງໝົດ*<br>*ລ້ານກີບ* |
|---|---|---|---|
| ໜີ້ປົກກະຕິ | 574,656 | 2,873 | 2,873 |
| ໜີ້ຄວນເອົາໃຈໃສ່ | - | - | - |
| ໜີ້ຕ່ຳກວ່າມາດຕະຖານ | - | - | - |
| ໜີ້ສົງໃສ | - | - | - |
| ໜີ້ສູນ | - | - | - |
| **ລວມ** | **574,656** | **2,873** | **2,873** |

## 15. ຊັບສິນບັດຄົງທີ່ມີຕົວຕົນ

| | *ອາຄານ ແລະ ການປັບປຸງ ລ້ານກີບ* | *ເຟີນີເຈີ ແລະ ເຄື່ອງຕົບແຕ່ງ ລ້ານກີບ* | *ຄອມພິວເຕີ ລ້ານກີບ* | *ພາຫະນະ ລ້ານກີບ* | *ລວມ ລ້ານກີບ* |
|---|---|---|---|---|---|
| **ມູນຄ່າເດີມ:** | | | | | |
| ນະວັນທີ 1 ມັງກອນ 2018 | 7,448 | 2,742 | 4,759 | 1,607 | 16,556 |
| ຮັບເຂົ້າເພີ່ມພາຍໃນປີ | - | 12 | 1,133 | - | 1,145 |
| ນະວັນທີ 31 ທັນວາ 2018 | 7,448 | 2,754 | 5,892 | 1,607 | 17,701 |
| **ຄ່າຫຼຸ້ຍຫ້ຽນສະສົມ:** | | | | | |
| ນະວັນທີ 1 ມັງກອນ 2018 | 4,098 | 1,464 | 2,989 | 540 | 9,091 |
| ຄ່າຫຼຸ້ຍຫ້ຽນພາຍໃນປີ | 1,488 | 535 | 750 | 260 | 3,033 |
| ນະວັນທີ 31 ທັນວາ 2018 | 5,586 | 1,999 | 3,739 | 800 | 12,124 |
| **ມູນຄ່າສຸດທິ:** | | | | | |
| ນະວັນທີ 31 ມັງກອນ 2018 | 3,350 | 1,278 | 1,770 | 1,067 | 7,465 |
| ນະວັນທີ 31 ທັນວາ 2018 | 1,862 | 755 | 2,153 | 807 | 5,577 |

## 16. ດອກເບ້ຍຄ້າງຮັບ

| | *31 ທັນວາ 2018 ລ້ານກີບ* | *31 ທັນວາ 2017 ລ້ານກີບ* |
|---|---|---|
| **ດອກເບ້ຍຄ້າງຮັບຈາກ:** | | |
| ເງິນຝາກຢູ່ທະນາຄານອື່ນ | 4,344 | 560 |
| ເງິນກູ້ໃຫ້ລູກຄ້າ | 1,617 | 1,297 |
| ຊັບຖືໄວ້ຈົນຄົບກຳນົດ | 7,343 | 5,897 |
| | **13,304** | **7,754** |

## 17. ຊັບສິນອື່ນໆ

| | *31 ທັນວາ 2018 ລ້ານກີບ* | *31 ທັນວາ 2017 ລ້ານກີບ* |
|---|---|---|
| ລາຍຈ່າຍລ່ວງໜ້າ | 13,263 | 15,579 |
| ລາຍຈ່າຍອື່ນ | 111 | - |
| | **13,374** | **15,579** |

## 18. ໜີ້ຕ້ອງສົ່ງໃຫ້ທະນາຄານ

| | *31 ທັນວາ 2018* | *31 ທັນວາ 2017* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| **ເງິນຝາກກະແສລາຍວັນຈາກທະນາຄານອື່ນພາຍໃນປະເທດ** | | |
| ທະນາຄານ ເອເອັນແຊັດ (ລາວ) ຈຳກັດ | 166,617 | 52,913 |
| ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ | 2,064 | 6,527 |
| ທະນາຄານລາວຈີນ | 19,603 | 13,387 |
| **ເງິນຝາກປະຈຳຈາກທະນາຄານອື່ນພາຍໃນປະເທດ** | | |
| ທະນາຄານ ເອເອັນແຊັດ (ລາວ) ຈຳກັດ | - | 66,344 |
| ທະນາຄານ ຄານາເດຍ (ລາວ) ຈຳກັດ | 30,000 | - |
| ໜີ້ຕ້ອງສົ່ງໃຫ້ແກ່ສະຖາບັນການເງິນອື່ນໆ | 5,865 | 559 |
| | **224,149** | **139,730** |

ເງິນຝາກປະຈຳຈາກທະນາຄານ ຄານາເດຍ (ລາວ) ຈຳກັດ ມີກຳນົດເວລາ 6 ເດືອນ ແລະ ມີອັດຕາດອກເບ້ຍ 3.95% ຕໍ່ປີ.

## 19. ໜີ້ຕ້ອງສົ່ງໃຫ້ລູກຄ້າ

| | *31 ທັນວາ 2018* | *31 ທັນວາ 2017* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| **ເງິນຝາກກະແສລາຍວັນ** | **1,753,074** | **1,718,143** |
| - ເປັນເງິນກີບ | 101,163 | 143,731 |
| - ເປັນເງິນຕາຕ່າງປະເທດ | 1,651,911 | 1,574,412 |
| **ເງິນຝາກປະຢັດ** | **193,314** | **113,692** |
| - ເປັນເງິນກີບ | 17,115 | 11,924 |
| - ເປັນເງິນຕາຕ່າງປະເທດ | 176,199 | 101,768 |
| **ເງິນຝາກປະຈຳ** | **692,441** | **146,277** |
| - ເປັນເງິນກີບ | 4,522 | 2,663 |
| - ເປັນເງິນຕາຕ່າງປະເທດ | 687,919 | 143,614 |
| | **2,638,829** | **1,978,112** |

## 19. ໜີ້ຕ້ອງສົ່ງໃຫ້ລູກຄ້າ (ຕໍ່)

ອັດຕາດອກເບ້ຍຂອງໜີ້ຕ້ອງສົ່ງໃຫ້ລູກຄ້າມີດັ່ງນີ້:

| | *2018* *ອັດຕາດອກເບ້ຍ* | *2017* *ອັດຕາດອກເບ້ຍ* |
|---|---|---|
| ເງິນຝາກກະແສລາຍວັນເປັນກີບ | ບໍ່ມີດອກເບ້ຍ | ບໍ່ມີດອກເບ້ຍ |
| ເງິນຝາກກະແສລາຍວັນເປັນເງິນຕາຕ່າງປະເທດ | ບໍ່ມີດອກເບ້ຍ | ບໍ່ມີດອກເບ້ຍ |
| ເງິນຝາກປະຢັດເປັນກີບ | 1.00% | 1.00% |
| ເງິນຝາກປະຢັດເປັນໂດລາ | 1.25% | 1.25% |
| ເງິນຝາກປະຢັດເປັນບາດ | 0.50% | 0.50% |
| ເງິນຝາກປະຈຳເປັນກີບ | 3.00% - 9.00% | 3.00% - 6.50% |
| ເງິນຝາກປະຈຳເປັນໂດລາ | 2.00% - 6.75% | 2.00% - 6.25% |
| ເງິນຝາກປະຈຳເປັນບາດ | 0.75% - 4.50% | 0.75% - 4.50% |

## 20. ດອກເບ້ຍຄ້າງຈ່າຍ

| | *31 ທັນວາ 2018* *ລ້ານກີບ* | *31 ທັນວາ 2017* *ລ້ານກີບ* |
|---|---|---|
| **ດອກເບ້ຍຄ້າງຈ່າຍໃຫ້:** | | |
| ທະນາຄານອື່ນໆ | 377 | 73 |
| ລູກຄ້າ | 9,706 | 2,080 |
| | **10,083** | **2,153** |

## 21. ໜີ້ສິນອື່ນໆ

| | *31 ທັນວາ 2018* *ລ້ານກີບ* | *31 ທັນວາ 2017* *ລ້ານກີບ* |
|---|---|---|
| ໜີ້ຕ້ອງສົ່ງໃຫ້ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | 950 | 812 |
| ໜີ້ຕ້ອງສົ່ງໃຫ້ພະນັກງານ | 4,457 | 6,686 |
| ໜີ້ສິນອື່ນໆ | 250 | 490 |
| | **5,657** | **7,988** |

## 22. ໜີ້ຕ້ອງສົ່ງອາກອນ

### *22.1 ໜີ້ຕ້ອງສົ່ງອາກອນ*

| | *31 ທັນວາ 2018*<br>*ລ້ານກີບ* | *31 ທັນວາ 2017*<br>*ລ້ານກີບ* |
|---|---|---|
| ອາກອນກຳໄລທີ່ຕ້ອງມອບ | 8,554 | 3,065 |
| ອາກອນເງິນເດືອນທີ່ຕ້ອງມອບ | 129 | - |
| | **8,683** | **3,065** |

### *22.2 ອາກອນກຳໄລ ("ອກລ")*

ສາຂາໄດ້ຫັກເງິນແຮໄວ້ສຳລັບອາກອນກຳໄລພາຍໃນປີ ອີງຕາມກົດໝາຍອາກອນຂອງ ສປປ ລາວ. ສາຂາມີພັນທະຈ່າຍອາກອນກຳໄລໃນອັດຕາ 24% ຂອງກຳໄລທັງໝົດກ່ອນເສຍອາກອນ ສຳລັບທ້າຍປີ 31 ທັນວາ 2018 ອີງຕາມກົດໝາຍອາກອນເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015 ເຊິ່ງມີຜົນບັງຄັບໃຊ້ວັນທີ 24 ພຶດສະພາ 2016.

| | *2018*<br>*ລ້ານກີບ* | *2017*<br>*ລ້ານກີບ* |
|---|---|---|
| ກຳໄລກ່ອນອາກອນ | 107,000 | 46,509 |
| ຄ່າໃຊ້ຈ່າຍທີ່ບໍ່ສາມາດຫັກອອກຕາມອັດຕາສ່ວນ | 269 | 1,726 |
| ປຽບທຽບອາກອນທີ່ເກີດຈາກຄວາມແຕກຕ່າງລະຫວ່າງການປະຕິບັດທາງການບັນຊີ ແລະ ກົດໝາຍສ່ວຍສາອາກອນ | 135 | 224 |
| ຂາດທຶນຍົກມາຈາກປີຜ່ານມາ | - | (8,679) |
| **ລາຍຮັບສຳລັບຫັກອາກອນ** | **107,404** | **39,780** |
| **ລາຍຈ່າຍອາກອນກຳໄລ, ຕາມອັດຕາກົດໝາຍ 24%** | **25,777** | **9,547** |
| ອາກອນກຳໄລຄ້າງຊຳລະນະຕົ້ນປີ | 3,065 | |
| ອາກອນກຳໄລທີ່ຊຳລະພາຍໃນປີ | (20,288) | (6,482) |
| **ອາກອນກຳໄລຄ້າງຊຳລະນະທ້າຍປີ** | **8,554** | **3,065** |

ລາຍການເສຍອາກອນຂອງສາຂາຂຶ້ນຢູ່ກັບການກວດສອບຂອງເຈົ້າໜ້າທີ່ສ່ວຍສາອາກອນ ເນື່ອງຈາກກົດໝາຍ ແລະ ກົດລະບຽບທາງດ້ານສ່ວຍສາອາກອນ ແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນ ອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງສຸດທ້າຍຂອງເຈົ້າໜ້າທີ່ສ່ວຍສາອາກອນ.

## 23. ທຶນຈົດທະບຽນທີ່ຖອກແລ້ວ

| | *2018* | *2017* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ຍອດຍົກມາ | 405,100 | 405,100 |
| ທຶນຈົດທະບຽນຖອກເພີ່ມພາຍໃນປີ/ໄລຍະ | - | - |
| **ຍອດເຫຼືອທ້າຍ** | **405,100** | **405,100** |

## 24. ເງິນສົດ ແລະ ທຽບເທົ່າເງິນສົດ

| | *31 ທັນວາ 2018* | *31 ທັນວາ 2017* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ເງິນສົດໃນຄັງ | 25,986 | 21,142 |
| ເງິນຝາກກະແສລາຍວັນກັບ ທຫລ | 326,331 | 199,680 |
| ເງິນຝາກກະແສລາຍວັນກັບທະນາຄານອື່ນ | 536,036 | 308,050 |
| ເງິນຝາກປະຈໍາກັບທະນາຄານອື່ນທີ່ມີມື້ຄົບກໍານົດເລີ່ມຕົ້ນແຕ່ 30 ຂຶ້ນໄປ ຫຼື ໜ້ອຍກວ່າ | 222,000 | 560,680 |
| | **1,110,353** | **1,089,552** |

## 25. ບັນດາລາຍການພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນອື່ນທີ່ກ່ຽວຂ້ອງແມ່ນທຸກໆລາຍການເຄື່ອນໄຫວທີ່ໄດ້ດໍາເນີນງານກັບພາກສ່ວນອື່ນເຊິ່ງມີສາຍພົວພັນກັບສາຂາ, ພາກສ່ວນທີ່ຈະກ່ຽວຂ້ອງກັບສາຂາ ຖ້າຫາກວ່າ:

(ກ) ແບບທາງກົງ ຫຼື ແບບທາງອ້ອມ ໂດຍຜ່ານໜຶ່ງ ຫຼື ຫຼາຍສື່ກາງ, ພາກສ່ວນອື່ນຈະຕ້ອງ:

- ມີການຄວບຄຸມ(ຖືກຄວບຄຸມໂດຍ), ຫຼື ພາຍໃຕ້ການຄວບຄຸມທົ່ວໄປກັບສາຂາ (ໃນນີ້ລວມມີບໍລິສັດແມ່, ສາຂາ ແລະ ສະມາຊິກຂອງ ສາຂາ);
- ມີຜົນປະໂຫຍດນໍາກັນກັບສາຂາເຊິ່ງສົ່ງຜົນກະທົບທີ່ໃຫຍ່ຫຼວງຕໍ່ກັບສາຂາ; ຫຼື
- ມີສ່ວນຮ່ວມໃນການຄວບຄຸມສາຂາ.

(ຂ) ພາກສ່ວນດັ່ງກ່າວແມ່ນມີຮຸ້ນສ່ວນນໍາສາຂາ;

(ຄ) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກຄົນສາຄັນຂອງຜູ້ບໍລິຫານຫຼັກຂອງສາຂາ ຫຼື ທະນາຄານແມ່;

(ງ) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກທີ່ໃກ້ຊິດຂອງຄອບຄົວຂອງບຸກຄົນສະເພາະທີ່ໄດ້ກ່າວເຖິງໃນຂໍ້ (ກ) ຫຼື (ຄ);

(ຈ) ພາກສ່ວນທີ່ກ່ຽວຂ້ອງ ກໍ່ແມ່ນຜູ້ທີ່ຄວບຄຸມທະນາຄານ, ມີສ່ວນຮ່ວມໃນການຄວບຄຸມ ຫຼືອິດທິພົນອັນໃຫຍ່ ຫຼວງ, ຫຼື ມີສິດທິອໍານາດການໃນການອອກສຽງສ່ວນໃຫຍ່ຕໍ່ ທະນາຄານທີ່ດໍາເນີນທຸລະກິດຢູ່, (ໂດຍທາງກົງ ຫຼື ທາງອ້ອມ), ທຸກໆພາກສ່ວນທີ່ໄດ້ກ່າວເຖິງໃນຂໍ້ (ຄ) ຫຼື (ງ); ຫຼື

(ສ) ພາກສ່ວນທີ່ກ່ຽວຂ້ອງແມ່ນແຜນຜົນປະໂຫຍດພາຍຫຼັງອອກວຽກຂອງພະນັກງານຂອງສາຂາ ຫຼື ທະນາຄານອື່ນໆທີ່ມີສາຍພົວພັນກັບສາຂາ.

## 25. ບັນດາລາຍການພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ຍອດເຫຼືອກັບພາກສ່ວນທີ່ກ່ຽວຂ້ອງມີດັ່ງຕໍ່ໄປນີ້:

| *ພາກສ່ວນກ່ຽວຂ້ອງ* | *ສາຍພົວພັນ* | *ທຸລະກຳ* | *31 ທັນວາ 2018 ໜີ້ຕ້ອງຮັບ/ (ໜີ້ຕ້ອງສົ່ງ) ລ້ານກີບ* | *31 ທັນວາ 2017 ໜີ້ຕ້ອງຮັບ/ (ໜີ້ຕ້ອງສົ່ງ) ລ້ານກີບ* |
|---|---|---|---|---|
| ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | ທະນາຄານແມ່ | ເງິນຝາກກະແສລາຍວັນ | 225,132 | 58,201 |
| | | ໜີ້ຕ້ອງສົ່ງອື່ນໆ | (950) | (812) |
| | | ເງິນຝາກປະຈຳ | - | 331,720 |
| | | ດອກເບ້ຍສະສົມ | - | 195 |
| ທະນາຄານແຫ່ງປະເທດຈີນ, ໜ່ວຍຊາງໄຮ ອາເອັມບີ ເທຣດິ້ງ | ບໍລິສັດໃນເຄືອ | ເງິນຝາກກະແສລາຍວັນ | 114,484 | 8,779 |
| | | ເງິນຝາກປະຈຳ | 446,400 | 228,960 |
| | | ດອກເບ້ຍສະສົມ | 609 | 365 |
| ທະນາຄານແຫ່ງປະເທດຈີນ (ຮົງກົງ) ຈຳກັດ | ບໍລິສັດໃນເຄືອ | ເງິນຝາກກະແສລາຍວັນ | 20,418 | 1,972 |
| ທະນາຄານແຫ່ງປະເທດຈີນ (ໄທ) ຈຳກັດມະຫາຊົນ | ບໍລິສັດໃນເຄືອ | ເງິນຝາກກະແສລາຍວັນ | 2,220 | 7,360 |
| ທະນາຄານແຫ່ງປະເທດຈີນ, ສາຂານິວຢອກ | ບໍລິສັດໃນເຄືອ | ເງິນຝາກກະແສລາຍວັນ | 163,245 | 229,533 |
| ທະນາຄານແຫ່ງປະເທດຈີນ, ສາຂາຊາງໄຮ | ບໍລິສັດໃນເຄືອ | ເງິນຝາກກະແສລາຍວັນ | 63 | 64 |

**25. ບັນດາລາຍການພາກສ່ວນທີ່ກ່ຽວຂ້ອງ (ຕໍ່)**

ລາຍການເຄື່ອນໄຫວສຳຄັນກັບບັນດາພາກສ່ວນທີ່ກ່ຽວຂ້ອງໃນໄລຍະ ມີດັ່ງລຸ່ມນີ້:

| | *2018*<br>*ລ້ານກີບ* | *2017*<br>*ລ້ານກີບ* |
|---|---|---|
| (ເພີ່ມຂຶ້ນ)/ຫຼຸດລົງສຸດທິ ຂອງເງິນຝາກ ຢູ່ທະນາຄານແຫ່ງປະເທດຈີນ ສາຂາອື່ນ: | | |
| - ເງິນຝາກກະແສລາຍວັນຢູ່ສຳນັກງານໃຫຍ່ | 166,931 | 40,771 |
| - ເງິນຝາກປະຈຳຢູ່ສຳນັກງານໃຫຍ່ | (331,720) | (245,520) |
| - ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງປະເທດຈີນ, ໜ່ວຍຊາງໄຮ ອາເອັມບີ ເທຣດິ້ງ | 105,705 | (44,957) |
| - ເງິນຝາກປະຈຳຢູ່ທະນາຄານແຫ່ງປະເທດຈີນ, ໜ່ວຍຊາງໄຮ ອາເອັມບີ ເທຣດິ້ງ | 217,440 | 228,960 |
| - ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງປະເທດຈີນ (ຮົງກົງ) ຈຳກັດ | 18,446 | 1,734 |
| - ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງປະເທດຈີນ (ໄທ) ຈຳກັດ ມະຫາຊົນ | (5,140) | (7,329) |
| - ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງປະເທດຈີນ, ສາຂານິວຢອກ | (66,288) | 151,012 |
| ຫຼຸດລົງ ຂອງການກູ້ຢືມຈາກທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | - | 409,200 |
| ລາຍຮັບດອກເບ້ຍສຳລັບເງິນຝາກກັບທະນາຄານແຫ່ງປະເທດຈີນ ສາຂາອື່ນໆ | 18,662 | 16,266 |
| ລາຍຈ່າຍດອກເບ້ຍສຳລັບການກູ້ຢືມຈາກທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | - | (3,086) |

***ການເຄື່ອນໄຫວກ່ຽວກັບບຸກຄະລາກອນທີ່ສຳຄັນຂອງສາຂາ***

ຜົນຕອບແທນຕໍ່ກັບຄະນະບໍລິຫານມີດັ່ງນີ້ :

| | *2018*<br>*ລ້ານກີບ* | *2017*<br>*ລ້ານກີບ* |
|---|---|---|
| ເງິນເດືອນ ແລະ ເງິນໂບນັດ | 2,805 | 2,802 |
| | **2,805** | **2,802** |

## 26. ເຫດການທີ່ເກີດຂຶ້ນພາຍຫຼັງວັນທີຂອງໃບລາຍງານຖານະການເງິນ

ນະມື້ເຮັດບົດລາຍງານ ບໍ່ມີເຫດການ ຫຼື ສະຖານະການໃດເກີດຂຶ້ນ ທີ່ຮຽກຮ້ອງໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນຂອງສາຂາ.

| ກະກຽມໂດຍ: | ກວດຄືນໂດຍ: |
|---|---|
| ທ່ານ Li Zhiwei<br>ຜູ້ຈັດການໜ່ວຍງານການບໍລິຫານການເງິນ<br>ແລະ ການດຳເນີນງານ | ທ່ານ Li Zhiyong<br>ຜູ້ອຳນວຍການໃຫຍ່ |

ນະຄອນຫຼວງວຽງຈັນ, ສປປ ລາວ

19 ເມສາ 2019